ສະຖາບັນຄົ້ນຄວ້າວິທະຍາສາດ ເຕັກນິກ ກະສິກຳ ແລະ ປ່າໄມ້

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມສາມາດ.

# ບົດລາຍງານ

# ການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ແລະ ປ່າໄມ້,

# ເມືອງຜາອຸດົມ, ແຂວງ ບໍ່ແກ້ວ.




ໂດຍ: ຄຳພູ ພຸດທະວົງ ແລະ ສົມໃຊ ວັນຄົງຍະລາດ.

ໂຄງການຍ່ອຍຄຸ້ມຄອງການຄົ້ນຄວ້າ.

ກຸມພາ, 2008.

I. ພາກສະເໜີ. ..........3
1.1 ຈຸດປະສົງ. ..........Error! Bookmark not defined.
II. ວິທີການຈັດຕັ້ງປະຕິບັດ. ..........Error! Bookmark not defined.
2.1 ເຄື່ອງມືທີ່ນຳໃຊ້..........Error! Bookmark not defined.
2.1.1 ການວິເຄາະ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້(AEZ ແລະ AEA) ລະດັບເມືອງ: Error! Bookmark not defined.
2.1.2 ການປະເມີນຜົນແບບມີສ່ວນຮ່ວມກັບຊາວກະສິກອນ (PRA) ໃນຂັ້ນບ້ານ: Error! Bookmark not defined.
2.2 ຂະບວນການຈັດຕັ້ງປະຕິບັດ. ..........Error! Bookmark not defined.
2.2.1 ຢູ່ ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ: Error! Bookmark not defined.
2.2.2 ຢູ່ ເມືອງ ເມິງ ແຂວງ ບໍ່ແກ້ວ. Error! Bookmark not defined.
2.3 ພະນັກງານເຂົ້າຮ່ວມ ..........Error! Bookmark not defined.
2.4 ຂໍ້ມູນທີ່ນຳໃຊ້..........Error! Bookmark not defined.
III. ຜົນໄດ້ຮັບ. ..........3
3.1 ສະພາບລວມ. ..........Error! Bookmark not defined.
3.1.1 ທີ່ຕັ້ງ ແລະ ຂອບເຂດຊາຍແດນ: 6
3.1.2 ການປົກຄອງ ແລະ ພົນລະເມືອງ. 6
3.1.3 ສະພາບພູມອາກາດ 6
3.1.4 ສະພາບແຫຼ່ງນ້ຳ. Error! Bookmark not defined.
3.1.5 ສະພາບການນຳໃຊ້ທີ່ດິນ ແລະ ການຜະລິດກະສິກຳ. 6
3.1.6 ສະພາບການລ້ຽງສັດ 7
3.1.7 ສະພາບການປູກໄມ້ອຸດສະຫະກຳ. 7
3.1.8 ສະພາບພື້ນຖານໂຄງລ່າງ. 7
3.1.9 ສະພາບການລົງທຶນໃນຂົງເຂດກະສິກຳ ແລະ ປ່າໄມ້ 7
3.1.10 ທ່າແຮງຂອງເມືອງ ເມິງ. 7
3.2 ການກຳນົດ ແລະ ແບ່ງເຂດນິເວດກະສິກຳ ແລະ ປ່າໄມ້. ..........8
3.3 ການອະທິບາຍເຂດນິເວດ ..........9
3.3.1 ການອະທິບາຍ ເຂດນິເວດ1: Error! Bookmark not defined.
3.3.2 ການອະທິບາຍເຂດນິເວດ2 Error! Bookmark not defined.
3.3.3 ການອະທິບາຍ ເຂດນິເວດ 3: Error! Bookmark not defined.
IV. ສະຫຼຸບ ແລະ ຖອດຖອນບົດຮຽນ. ..........Error! Bookmark not defined.
4.1 ຂົງເຂດການຄົ້ນຄວ້າ ..........Error! Bookmark not defined.
4.2 ຫົວຂໍ້ການຄົ້ນຄວ້າ ປະຈຳສົກປີ 2008-2009 ..........Error! Bookmark not defined.
4.3 ຫົວຂໍ້ການຄົ້ນຄວ້າ ໃນລະດູການຜະລິດ2008. ..........Error! Bookmark not defined.
V. ແຜນການຕໍ່ໜ້າ: ..........Error! Bookmark not defined.

## I. ພາກສະເໜີ.

ໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມເຂັ້ມແຂງ ຊຶ່ງເປັນໂຄງການໄລຍະທີສອງທີ່ສະໜັບສະໜູນໂດຍ ອີງ ການຊີດາ ສືບຕໍ່ສະໜັບສະໜູນສະຖາບັນຄົ້ນຄວ້າ ວິທະຍາສາດ ເຕັກນິກ ກະສິກຳ ແລະ ປ່າໄມ້ ເພື່ອພັດທະນາ ແລະ ຂະຫຍາຍວຽກງານການຄົ້ນຄວ້າທົດລອງດ້ານກະສິກຳ ແລະ ປ່າໄມ້ໃນເຂດພູດອຍ ໂດຍມີສ່ວນຮ່ວມຂອງພາກສ່ວນຕ່າງໆຈາກທ້ອງຖິ່ນໃນເມືອງເປົ້າໝາຍຂອງໂຄງການ.

ການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້ ແມ່ນໜ້າວຽກໜຶ່ງ ຂອງໂຄງການຍ່ອຍຄຸ້ມຄອງການ ຄົ້ນຄວ້າທີ່ມີຄວາມສຳຄັນ ເພື່ອຊ່ວຍໃນການສ້າງແຜນການ ແລະ ກຳນົດຊີງເຂດການຄົ້ນຄ້ວາ ຢູ່ໃນ 6 ເມືອງ ເປົ້າໝາຍໃໝ່ຂອງໂຄງການ ບົນພື້ນຖານ ຄວາມເຂົ້າໃຈກ່ຽວກັບເງື່ອນໄຂທາງດ້ານກາຍຍະພາບ, ລະບົບການ ຜະລິດກະສິກຳ-ປ່າໄມ້ ທີ່ຕິດພັນກັບວິຖີການດຳລົງຊີວິດຂອງຊາວກະສິກອນຊົນເຜົ່າຕ່າງໆໃນແຕ່ລະເຂດນິເວດກະສິກຳ-ປ່າໄມ້; ເພື່ອກຳນົດປະເດັນ ສຳຄັນ ແລະ ກຸ່ມບັນຫາໃນການຈັດບູລິມະສິດສຳລັບການຄົ້ນຄ້ວາ.

ສະນັ້ນ, ບົດລາຍງານສະບັບນີ້ໄດ້ຖືກຂຽນຂຶ້ນມາ ໂດຍມີເປົ້າໝາຍເລັ່ງໃສ່ສະໜອງຂໍ້ມູນຜົນຂອງການ ວິເຄາະ ລະບົບ ແລະ ການກຳນົດແບ່ງເຂດນິເວດາະສິກຳ ແລະ ປ່າໄມ້ໃນລະດັບເມືອງ. ໂດຍສະເພາະແມ່ນຂໍ້ມູນທາງດ້ານກາຍຍະພາບ, ດ້ານເສດຖະກິດ-ສັງຄົມ ແລະ ລະບົບການຜະລິດກະສິກຳ ແລະ ປ່າໄມ້ ທີ່ຕິດພັນກັບວິຖີການດຳລົງຊີວິດຂອງຊາວກະສິກອນຢູ່ໃນແຕ່ລະເຂດນິເວດາະສິກຳ ແລະ ປ່າໄມ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດກິດຈະກຳນການຄົ້ນຄ້ວາທົດລອງຂອງໂຄງການຄົ້ນຄວ້າເຂດພູດອຍ ແລະ ພັດທະນາຄວາມສາມາດໃນເມືອງເປົ້າໝາຍຂອງໂຄງການ.

### 1.1 ຈຸດປະສົງ.

- ມີຄວາມເຂົ້າໃຈກ່ຽວກັບສະພາບທາງດ້ານຊີວະກາຍະພາບ ແລະ ເສດຖະກິດ ສັງຄົມຂອງແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້ ຢູ່ໃນລະດັບເມືອງ.
- ມີຄວາມເຂົ້າໃຈແຈ້ງວິຖີການດຳລົງຊີວິດຂອງປະຊາຊົນ ໂດຍສະເພາະແຕ່ລະຊົນເຜົ່າ ໃນແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້ ຢູ່ໃນແຕ່ລະເມືອງເປົ້າໝາຍໂຄງການ.
- ສາມາດຈັດລຽງບູລິມະສິດ, ກຳນົດປະເດັນສຳຄັນ, ກຸ່ມບັນຫາ, ທ່າແຮງ, ໂອກາດ ແລະ ຂໍ້ຈຳກັດໃນການພັດທະນາ ຂອງແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້.
- ກຳນົດໄດ້ຊີງເຂດສຳລັບການຄົ້ນຄວ້າ, ການສົ່ງເສີມ ແລະ ທາງເລືອກທີ່ດີໃນການພັດທະນາ ເພື່ອແກ້ໄຂບັນຫາຕ່າງໆ.
- ເພື່ອສ້າງຄວາມເຂົ້າໃຈກ່ຽວກັບປະເດັນສຳຄັນ ແລະ ກຸ່ມບັນຫາທີ່ໄດ້ຮັບຈາກຜົນຂອງການວິເຄາະລະບົບນິເວດກະສິກຳ ແລະ ປ່າໄມ້ ທີ່ມີຜົນກະທົບໃນລະດັບກຸ່ມບ້ານ ແລະ ບ້ານເປົ້າໝາຍຂອງໂຄງການ.

## II. ວິທີການຈັດຕັ້ງປະຕິບັດ.

### 2.1 ເຄື່ອງມືທີ່ນຳໃຊ້

#### 2.1.1 ການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້ ລະດັບເມືອງ:

ການວິເຄາະລະບົບ ແລະ ແບ່ງເຂດນິເວດກະສິກຳ ປ່າໄມ້ ແມ່ນການອະທິບາຍຄຸນລັກສະນະດ້ານຕ່າງໆ ຂອງແຕ່ລະເຂດນິເວດາະສິກຳ ແລະ ປ່າໄມ້, ການກຳນົດປະເດັນສຳຄັນ, ກຸ່ມບັນຫາຕ່າງໆ ແລະ ຈັດບູລິມະສິດສຳລັບການແກ້ໄຂເພື່ອການພັດທະນາ ໃນແຕ່ລະເຂດນິເວດກະສິກຳ ປ່າໄມ້ ໃນຂັ້ນເມືອງ.

### 2.1.2 ການປະເມີນຜົນແບບມີສ່ວນຮ່ວມກັບຊາວກະສິກອນ (PRA) ໃນຂັ້ນບ້ານ:

ການປະເມີນຜົນຊົນນະບົດແບບມີສ່ວນຮ່ວມກັບຊາວກະສິກອນ (PRA) ໃນບ້ານເປົ້າໝາຍແມ່ນ ເພື່ອຈຳນົດເຕັກໂນໂລຊີທີ່ ເໝາະສົມຕໍ່ສະພາບທາງດ້ານກາຍຍະພາບ, ດ້ານເສດຖະກິດ ສັງຄົມ ແລະ ວິຖີການດຳລົງຊີວິດຂອງຊາວກະສິກອນ ໃນການຂະຫຍາຍຂົງເຂດການຄົ້ນຄ້ວາຮ່ວມກັບໂຄງການໃນຕໍ່ໜ້າ.

## 2.2 ຂະບວນການຈັດຕັ້ງປະຕິບັດ.

### 2.2.1 ທີ່ສູນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ພາກເໜືອ:

- ຈັດກອງປະຊຸມສົນທະນາ ແລະ ແລກປ່ຽນຄວາມຄິດຄວາມເຫັນ ກ່ຽວກັບວິທີ ການ, ຂໍ້ແນະນຳ ແລະ ແບບຟອມໃນການເກັບກຳຂໍ້ມູນ, ການກຳນົດບັນຫາ ແລະ ວິທີການປະເມີນຜົນຊຸມຊົນແບບ ມີສ່ວນຮ່ວມກັບຊາວກະສິກອນ ໃນບ້ານທີ່ເປັນຕົວແທນຂອງແຕ່ລະເຂດນິເວດກະສິກຳ ແລະ ປ່າໄມ້ ໃນແຕ່ລະເມືອງເປົ້າໝາຍ. ຊື່ງບ້ານເປົ້າໝາຍຂອງໂຄງການ ຕ້ອງຕອບສະໜອງໄດ້ບັນດາເງື່ອນໄຂດັ່ງນີ້:
  1. ເປັນບ້ານທີ່ໄດ້ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ.
  2. ເປັນຕົວແທນໃຫ້ແກ່ເຂດນິເວດກະສິກຳ ແລະ ປ່າໄມ້ ໃນລະດັບເມືອງ
  3. ເປັນບ້ານທີ່ຍັງທຸກຍາກ
  4. ມີເສັ້ນທາງສາມາດເຂົ້າເຖິງໄດ້ ສອງລະດູ.
  5. ເປັນບ້ານທີ່ເປັນຕົວແທນຂອງຊົນເຜົ່າໃນເມືອງ
  6. ສະເພາະເປົ້າໝາຍໃດໜຶ່ງ.
  7. ມີການລົງທຶນທາງດ້ານກະສິກຳ ແລະ ປ່າໄມ້(ຢາງພາລາ, ສາລີ ແລະ ອື່ນໆ)

### 2.2.2 ເມືອງເປົ້າໝາຍໂຄງການ.

- **ສະເໜີຈຸດປະສົງ ແລະ ກິດຈະກຳການເຄື່ອນໄຫວ**
- **ກຳນົດແບ່ງເຂດນິເວດກະສິກຳ ປ່າໄມ້ ແລະ ອະທິບາຍຄຸນລັກສະນະ ຂອງແຕ່ລະເຂດນິເວດ**

- ປັບປຸງຂໍ້ມູນໃຫ້ສົມບູນ ແລະ ກຳນົດແບ່ງເຂດນິເວດກະສິກຳ ປ່າໄມ້
- ອະທິບາຍເຂດນິເວດກະສິກຳ ປ່າໄມ້(ຕາມຈຸຄົ້ນຄ້ວາ ແລະ ບັນທຶກຄຸນລັກສະນະແຕ່ລະເຂດ ນິເວດ
- ກຳນົດບູລິມະສິດກຸ່ມບ້ານພັດທະນາຂອງເມືອງ

- **ການວິເຄາະຂໍ້ມູນດ້ານກາຍຍະພາບ ແລະ ເສດຖະກິດ ສັງຄົມ ຕາມເຂດ ນິເວດກະສິກຳ ປ່າໄມ້**

- ປຶກສາຫາລືບັນຫາຫຼັກ ແລະ ສາຍເຫດທີ່ຕົ້ນຕໍ
- ປຶກສາຫາລືກາລະໂອກາດຂອງແຕ່ລະເຂດນິເວດກະສິກຳ ປ່າໄມ້

- **ກຳນົດ ແລະ ອະທິບາຍຄຸນລັກສະນະຕ່າງໆຂອງ ເຂດນິເວດ ກະສິກຳ ປ່າໄມ້ ໃນກຸ່ມບ້ານພັດທະນາ**

- ຊ້ອນທັບແຜນທີ່ຂອບເຂດນິເວດກັບແຜນທີ່ເຂດກຸ່ມບ້ານພັດທະນາ
- ປຶກສາຫາລືກ່ຽວກັບແຜນພັດທະນາກຸ່ມບ້ານຕາມຍຸດທະສາດເມືອງ
- ປຶກສາຫາລືກ່ຽວກັບລະບົບການຜະລິດຕົ້ນຕໍ (ລະບົບຟາມ) ກຸ່ມບ້ານພັດທະນາ
- ປຶກສາຫາລືກ່ຽວກັບວິຖີການດຳລົງຊີວິດຂອງຊາວບ້ານ
- ປຶກສາຫາລືກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ

- **ວິເຄາະຂໍ້ມູນດ້ານກາຍຍະພາບ ແລະ ເສດຖະກິດ ສັງຄົມ ຂອງກຸ່ມບ້ານພັດທະນາ**

- ປຶກສາຫາລືບັນຫາຫຼັກ ແລະ ສາຍເຫດທີ່ຕົ້ນຕໍ
- ປຶກສາຫາລືກາລະໂອກາດໃນການ ພັດທະນາຂອງກຸ່ມບ້ານພັດທະນາທີ່ເປັນຈຸດສຸມ

- **ກຳນົດທ່າແຮງ ກ່ຽວກັບຂົງເຂດ ການຄົ້ນຄ້ວາໃນກຸ່ມບ້ານ**

- ປຶກສາຫາລືທ່າແຮງສຳລັບຂົງເຂດການຄົ້ນຄ້ວາ
- ຈັດບູລິມະສິດສຳລັບຂົງເຂດຂອງ ການຄົ້ນຄ້ວາ

- **ກຳນົດມາດຖານ ແລະ ຄັດເລືອກບ້ານເປົ້າໝາຍສຳລັບການຄົ້ນຄ້ວາ**

- ຄັດເລືອກບ້ານເປົ້າໝາຍກະກຽມເຮັດການສຳມະໂນບັນຫາ

- **ການປະເມີນຜົນຊົນນະບົດແບບມີສ່ວນຮ່ວມກັບຊາວກະສິກອນ**:

- ປະຫັວດຄວາມເປັນມາຂອງບ້ານ
- ແຜນທີ່ສະພາບຫົນທາງເຂົ້າຫາບ້ານ (ບົດບາດຍິງ-ຊາຍ, ຊົນເຜົ່າ)
- ວິເຄາະລະບົບການຜະລິດກະສິກຳ (ບົດບາດຍິງ-ຊາຍ, ຊົນເຜົ່າ)
- ວິເຄາະວິຖີການດຳລົງຊີວິດ (ບົດບາດຍິງ-ຊາຍ, ຊົນເຜົ່າ)
- ວິເຄາະ ແລະ ຈັດຖານະຄວາມທຸກຍາກ (ຍິງ-ຊາຍ, ຊົນເຜົ່າ, ຊົນຊັ້ນ)
- ວິເຄາະ ແລະ ຈັດລະດັບຂອງກຸ່ມບັນຫາ (ຍິງ-ຊາຍ, ຊົນເຜົ່າ, ຊົນຊັ້ນ)
- ສັງລວມຄຳຄິດຄຳເຫັນຈາກຊາວບ້ານ
- ແຕ່ລະຈຸສະຫຼູບຜົນໄດ້ຮັບຕໍ່ຊາວບ້ານເພື່ອຄວາມເປັນເອກະພາບ

## 2.3 ຂໍ້ມູນທີ່ໄດ້ນຳໃຊ້

| ຂໍ້ມູນທີ່ມີ | | ປະເພດຂໍ້ມູນທີ່ຈຳເປັນ | | | |
|---|---|---|---|---|---|
| **ປະເພດຂໍ້ມູນ** | **ລະດັບ** | **ປະເພດຂໍ້ມູນ** | **ລະດັບ** | **ແຫຼ່ງຂອງຂໍ້ມູນ** | **ຜູ້ຮັບພິດຊອບ** |
| ແຜນທີ່ເສັ້ນລະດັບ | ເມືອງ | ຂອບເຂດກຸ່ມບ້ານ | ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | ວາງແຜນນຳໃຊ້ທີ່ດິນ |
| ການນຳໃຊ້ທີ່ດິນ & ປົກຫຸ້ມປ່າໄມ້ | ເມືອງ | ທີ່ຕັ້ງບ້ານ, ພົນລະເມືອງ | ລະດັບບ້ານ | ສູນສະຖິຕິແຫ່ງຊາດ ແລະ ພາກສະໜາມ | ວາງແຜນນຳໃຊ້ທີ່ດິນ ເສດຖະກິດ ສັງຄົມ |
| DEM | ເມືອງ | ການນຳໃຊ້ທີ່ດິນ & ປົກຫຸ້ມປ່າໄມ້ ໃນປະຈຸບັນ | ເມືອງ ແລະ ກຸ່ມບ້ານພັດທະນາ | ພາບຖ່າຍດາວທຽມ ສຳຫຼວດໃນສະໜາມ | ວາງແຜນນຳໃຊ້ທີ່ດິນ ປ່າໄມ້ |
| ດິນ ແລະ ຄວາມເໝາະສົມຂອງດິນ | ເມືອງ | ເນື້ອທີ່ປ່າໄມ້ | ເມືອງ ແລະ ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | |
| ສາຍນໍ້າ,ຫົນທາງ, ຈຸດທີ່ຕັ້ງຂອງບ້ານ | ເມືອງ | ການມອບດິນ ມອບປ່າ | ເມືອງ, ກຸ່ມບ້ານ ແລະ ບ້ານ | ສຳຫຼວດໃນສະໜາມ | |
| ລະດັບຄວາມສູງ ຄວາມຄ້ອຍຊັນ | ເມືອງ | ກິດຈະກຳການ ພັດທະນາຂອງ ໂຄງການ, ສຳປະທານ | ເມືອງ ແລະ ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | ເສດຖະກິດ ສັງຄົມ ລະບົບຜະລິດກະສິກຳ ວາງແຜນນຳໃຊ້ທີ່ດິນ |
| ຜົນຜະລິດກະສິກຳ ປ່າໄມ້ ປະຈຳປີ | ເມືອງ | ຜົນຜະລິດກະສິກຳ ປ່າໄມ້ ປະຈຳປີ | ກຸ່ມບ້ານພັດທະນາ | ສຳຫຼວດໃນສະໜາມ | ລະບົບຜະລິດກະສິກຳ ເສດຖະກິດ ສັງຄົມ |

## III. ຜົນໄດ້ຮັບ

### 3.1 ສະພາບລວມ:3.1.1 ທີ່ຕັ້ງ ແລະ ຂອບເຂດຊາຍແດນ:

ເມືອງ ຜາອຸດົມແມ່ນ ເມືອງ ໜຶ່ງທີ່ນອນຢູ່ໃນ 47 ເມືອງທຸກຍາກທົ່ວປະເທດ ແລະ ຈັດຢູ່ໃນເມືອງ ທຸກຍາກ ອັນດັບທີ 2 ຂອງ ແຂວງ ບໍ່ແກ້ວ, ຕັ້ງຢູ່ຫ່າງຈາກເທດສະບານແຂວງ ໄປທາງທິດໄຕ້ປະມານ 74 ກິໂລແມັດ; ເຊິ່ງມີຂອບເຂດຊາຍແດນ ຕິດຈອດຄື:

- ທິດເໜືອຕິດກັບ ເມືອງຫ້ວຍຊາຍ ແຂວງ ຫຼວງນ້ຳທາ, ເມືອງວຽງພູຄາ ແລະ ເມືອງນາແລ ແຂວງຫຼວງນ້ຳທາ.
- ທິດໃຕ້ຕິດກັບເມືອງ ປາກແບ່ງ ແຂວງອຸດົມໄຊ.
- ທິດຕາເວັນອອກຕິດກັບເມືອງປາກທາ, ແຂວງບໍ່ແກ້ວ.
- ທິດຕາເວັນຕົກຕິດກັບເມືອງຮຸນ ແຂວງອຸດົມໄຊ.

ເມືອງ ຜາອຸດົມ ມີເນື້ອທີ່ປະມານ 157,900 ເຮັກຕາ, ເນື້ອທີ່ສ່ວນໃຫຍ່ເປັນພູເຂົາສະຫຼັບຊັບຊ້ອນ ກວມເອົາ 80-85% ແລະ ເປັນເຂດທົ່ງພຽງ ຫຼື ຫຼຸບໂນນເລັກນ້ອຍ ຕາມແຄມນ້ຳທາ ແລະ ສາຍຫ້ວຍຕ່າງໆ. ມີລະດັບຄວາມສູງຈາກໜ້ານ້ຳທະເລຢູ່ໃນລະຫວ່າງ 329 ຫາ 1,662 ແມັດ, ສະເລ່ຍຄວາມໜາແໜ້ນ 23 ຄົນ/ກິໂລແມັດມົນທົນ.

### 3.1.2 ການປົກຄອງ ແລະ ພົນລະເມືອງ.

ໂດຍອີງໃສ່ການຕັ້ງຖິ່ນຖານພູມລຳເນົາຂອງປະຊາຊົນພາຍໃນເມືອງ, ການຕັ້ງກຸ່ມບ້ານພັດທະນາແມ່ນ ປະກອບມີ 17 ກຸ່ມບ້ານພັດທະນາ, ມີ 89 ບ້ານ, ມີ 53 ບ້ານ ບໍ່ມີເສັ້ນທາງລົດເຂົ້າເຖິງ, ທົ່ວເມືອງ ມີ 6 ຊົນເຜົ່າຫຼັກຄື: ຂະມຸ, ລະເມດ, ລື້, ລາວລຸ່ມ, ເຜົ່າມົ້ງ ແລະ ເຜົ່າໄທດຳ, ທົ່ວເມືອງມີ 6,177 ຄົວເຮືອນ, ມີພົນລະເມືອງທັງໝົດ 38,359ຄົນ; ເພດຍິງ 19,468 ຄົນ. ໃນນັ້ນໄດ້ຈັດລະດັບຄົວເຮືອນໃນເມືອງຜາອຸດົມ: ຄອບຄົວພົ້ນທຸກ ກຸ້ມກິນ ແລະ ພໍຢູ່ພໍກິນຂຶ້ນໄປ ມີ 4,497 ຄົວເຮືອນ, ຄອບຄົວທຸກຍາກ ມີ 1,698 ຄົວເຮືອນ.

### 3.1.3 ສະພາບພູມອາກາດ ແລະ ແຫຼ່ງນ້ຳ

ມີອຸ່ນນະພູມສະເລ່ຍ ຢູ່ໃນລະຫວ່າງ 25.25 ອົງສາເຊ, ອຸ່ນະພູມສະເລ່ຍຕ່ຳສຸດແມ່ນ 21.4 ອົງສາເຊ ໃນເດືອນທັນວາ ແລະ ອຸ່ນະພູມສະເລ່ຍສູງສຸດແມ່ນ 28.8 ອົງສາເຊ. ປະລິມານນ້ຳຝົນສະເລ່ຍຢູ່ໃນລະຫວ່າງ 1,750.2 ມີລີແມັດ. ລະດູຝົນເລີ່ມແຕ່ ທ້າຍເດືອນ ເມສາ ຫາ ເດືອນທັນວາ ແລະ ລະດູແລ້ງເລີ່ມແຕ່ ທ້າຍເດືອນທັນວາ ເຖິງ ຕົ້ນເດືອນ ເມສາ. ເມືອງຜາອຸດົມ ມີແຫຼ່ງນ້ຳທີ່ສຳຄັນແມ່ນນ້ຳທາ ແລະ ສາຂາຄື: ນ້ຳຄະ, ນ້ຳນ້ຳລຽງ ແລະ ບັນດາສາຍຫ້ວຍຕ່າງໆ: ຫ້ວຍທອນ, ຫ້ວຍໂຄ້ງ ແລະ ຫ້ວຍສັງ... ເຊິ່ງບັນດາແມ່ນ້ຳດັ່ງກ່າວມີນ້ຳຫຼາຍໃນລະດູຝົນ ແລະ ນ້ຳຈະບົກແຫ້ງໃນລະດູແລ້ງ.

### 3.1.5 ສະພາບການນຳໃຊ້ທີ່ດິນ ແລະ ການຜະລິດກະສິກຳ.

ເວົ້າລວມແລ້ວ ການນຳໃຊ້ທີ່ດິນສ່ວນຫຼາຍຍັງບໍ່ທັນສາມາດນຳໃຊ້ໝົດຄວາມສາມາດ (ເນື້ອທີ່ທົ່ງພຽງມີປະມານ 4,800 ເຮັກຕາ) ແລະ ການນຳໃຊ້ເຫັນວ່າ ຍັງບໍ່ເໝາະສົມກັບສະພາບພື້ນທີ່ເປັນຕົ້ນແມ່ນການປູກໄມ້ອຸດສະຫະກຳໃນເຂດທີ່ມີສະພາບພື້ນທີ່ຮາບພຽງ ຫຼາຍເຂດດິນກະສິກຳຍັງປະເປັນເຮື້ອ, ປ່າເລົ່າອ່ອນ ບໍ່ທັນບຸກເບີກຊັບຊ່າວເຮັດນາ; ແຕ່ກົງກັນຂ້າມການນຳໃຊ້ດິນໃນເຂດພູສູງຊັນເພື່ອເຮັດໄຮ່ປູກເຂົ້າຍັງກວມເນື້ອທີ່ຫຼາຍ.

- ເນື້ອທີ່ນາ 1,934.8 ເຮັກຕາ, ນາປີມີ 3,445ເຮັກຕາ ແລະ ນາແຊງມີ 327 ເຮັກຕາ, ເນື້ອທີ່ຮັບນ້ຳຊົນລະປະທານທັງໝົດມີ 587 ເຮັກຕາ.
- ເນື້ອທີ່ໄຮ່ທັງໝົດ 5,268 ເຮັກຕາ.
- ເນື້ອທີ່ປູກສາລີ 817 ເຮັກຕາ.

- ເນື້ອທີ່ປູກຖົ່ວດິນ 60.6 ເຮັກຕາ.
- ເນື້ອທີ່ປູກພືດອື່ນໆ 217 ເຮັກຕາ.

### 3.1.6 ສະພາບການລ້ຽງສັດ

ນອກຈາກການເຮັດນາ ແລະ ປູກພືດເສດຖະກິດ; ການລ້ຽງສັດກໍ່ແມ່ນກິດຈະກຳນຶ່ງ ທີ່ມີຄວາມສຳຄັນທີ່ຖືເປັນແຫຼ່ງ ສ້າງ ລາຍຮັບໃຫ້ແກ່ຄອບຄົວ ໃນນັ້ນ ລວມມີ ການລ້ຽງສັດໃຫຍ່: ຄວາຍ, ງົວ ແລະ ສັດນ້ອຍ: ໝູ, ແບ້, ສັດປີກ ແລະ ລ້ຽງປາ; ລາຍລະ ອຽດດັ່ງລຸ່ມນີ້:

| ລ/ດ | ປະເພດສັດລ້ຽງ | ຈຳນວນ |
|---|---|---|
| 1 | ຄວາຍ | 7,537 ໂຕ |
| 2 | ງົວ | 5,050 ໂຕ |
| 3 | ໝູ | 12,922 ໂຕ |
| 4 | ມ້າ | 14 ໂຕ |
| 5 | ແບ້ | 2,683 ໂຕ |
| 6 | ສັດປີກ | 92,097 ໂຕ |
| 7 | ໜອງປາ | 7.16 ຮຕ |

### 3.1.6 ສະພາບການປູກໄມ້ອຸດສະຫະກຳ.

ປະກອບມີ ເນື້ອທີ່ປູກຢາງພາລາ 507ເຮັກຕາ ແລະ ປູກໄມ້ເກດສະໜາ 341 ເຮັກຕາ. ເຊິ່ງຊະນິດໄມ້ດັ່ງກ່າວນີ້ ຖື ວ່າ ເປັນໄມ້ເສດຖະກິດທີ່ນິຍົມກັນປູກ ແລະ ມີແນວໂນ້ມຈະຫຍາຍເນື້ອທີ່ຂຶ້ນເລື້ອຍໆ.

### 3.1.7 ສະພາບພື້ນຖານໂຄງລ່າງ.

ມີທາງດິນແດງຈາກແຂວງ ສາມາດທຽວໄດ້ສອງລະດູ ແລະ ກຳລັງທະລຸເສັ້ນທາງຈາກເມືອງຜາອຸດົມ ອອກສູ່ເມືອງປາກ ແບ່ງ, ເມືອງຜາອຸດົມ ຫາເມືອງຮຸນ ແຂວງອຸດົມໄຊ ແລະ ທະລຸຈາກເມືອງຜາອຸດົມຫາເມືອງນາແລ ແຂວງຫຼວງນ້ຳທາ. ມີເສັ້ນທາງສາມາດເຂົ້າເຖິງໄດ້ແຕ່ລະກຸ່ມບ້ານ, ມີໄຟຟ້າໃນເຂດເທດສະບານ, ສາມາດຮັບສັນຍານໂທລະສັບໄດ້. ມີ ໂຮງໝໍເມືອງ, ມີສຸກສາລາປະຈຳ 5 ກຸ່ມບ້ານພັດທະນາ, ມີກອງທຶນ 74 ບ້ານ, ມີໂຮງຮຽນມັດທະຍົມປາຍ 1 ແຫ່ງ, ມັດ ທະຍົມຕົ້ນ 3 ແຫ່ງ, ປະຖົມ 84 ແຫ່ງ, ໂຮງຮຽນອະນຸບານ 10 ແຫ່ງ ແລະ ໂຮງຮຽນນອກລະບົບ 22 ແຫ່ງ.

### 3.1.8 ສະພາບການລົງທຶນໃນຂົງເຂດກະສິກຳ ແລະ ປ່າໄມ້

- ກອງທຶນລົບລ້າງຄວາມທຸກຍາກ ເລີ້ມຕົ້ນປີ 2004.
- ກອງທຶນນະໂຍບາຍ ໃຫ້ກູ້ຢືມເພື່ອການປູກຝັງ, ລ້ຽງສັດ ເລີ້ມຕົ້ນປີ 2007.
- ໂຄງການ RDMA ພັດທະນາຊົນນະບົດເຂດພູດອຍພາກເໜືອ ເລີ້ມປີ 2004-08 (GTZ).
- FORCOM ສົ່ງເສີມຄວາມອາດສາມາດ ຂອງ ຊາວບ້ານ ແລະປົກປັກຮັກສາເຄື່ອງປ່າ ຂອງດົງ.
- ໂຄງການຊ່ວຍເຫຼືອຊາວກະສິກອນດ້ານການລ້ຽງສັດ (EU) ຈັດຕັ້ງປະຕິບັດໃນເດືອນກັນຍາ 2007.
- NCA ສົ່ງເສີມການລ້ຽງສັດໃຫ່ຍ (ງົວແມ່ສາວ) 7ບ້ານ ເຂດພູວຽງໄຊ-ບ້ານເດືອ.
- CONCERN ສົ່ງເສີມຄວາມອາດສາມາດ ແລະ ປົກປັກຮັກສາເຄື່ອງປ່າຂອງດົງ.

## 3.2 ການກໍານົດ ແລະ ແບ່ງເຂດນິເວດກະສິກໍາ ແລະ ປ່າໄມ້.

ໂດຍອີງໃສ່ສະພາບທາງດ້ານກາຍຍະພາບ; ເຂດນິເວດກະສິກໍາ ແລະ ປ່າໄມ້ຂອງ ເມືອງພາອຸດົມ ສາມາດຈັດແບ່ງອອກເປັນ 3 ເຂດນິເວດດັ່ງນີ້.

- ເຂດນິເວດ1: ກໍານົດເອົາລະດັບຄວາມສູງຈາກລະດັບໜ້ານໍ້າທະເລ ແຕ່ 800 -1672 ແມັດ; ເປັນເຂດພູສູງທີ່ມີ ຄວາມຄ້ອຍຊັນສູງ, ເປັນເຂດປ່າປ້ອງກັນ. ມີເນື້ອທີ່ປະມານ 76,940 ເຮັກຕາ ກວມ 40.81 % ຂອງເນື້ອທີ່ທົ່ວເມືອງ.
- ເຂດນິເວດ2: ກໍານົດເອົາລະດັບຄວາມສູງຈາກລະດັບໜ້ານໍ້າທະເລ ແຕ່ 500 - 800ແມັດ; ເປັນເຂດ ເນີນສູງທີ່ມີຄວາມຄ້ອຍຊັນປານກາງ, ເປັນເຂດນໍາໃຊ້ຜະລິດກະສິກໍາປ່າ ໄມ້ປະສົມປະສານ. ມີເນື້ອທີ່ປະມານ 88,710 ເຮັກຕາ ກວມ 47.05 % ຂອງເນື້ອທີ່ທົ່ວເມືອງ.
- ເຂດນິເວດ3: ກໍານົດເອົາລະດັບຄວາມສູງຈາກລະດັບໜ້ານໍ້າທະເລ ແຕ່ 358 - 500ແມັດ, ເປັນເຂດພູພຽງລຸບໂນນເລັກນ້ອຍ ແລະ ຮາບພຽງລ້ອງນໍ້າ ມີເນື້ອທີ່ປະມານ 22,880 ເຮັກຕາ ກວມ 12.14% ຂອງເນື້ອທີ່ທົ່ວເມືອງ.




### 3.3 ການອະທິບາຍເຂດນິເວດ

ແມ່ນຜົນໄດ້ຮັບຈາກການເກັບກຳຂໍ້ມູນແບບລະອຽດຂອງແຕ່ລະເຂດນິເວດ ໂດຍສະເພາະ ແມ່ນຄຸນລັກສະນະທາງດ້ານກາຍະພາບ ແລະ ເສດຖະກິດ ທີ່ເກັບຈາກພາກສ່ວນທີ່ກ່ຽວຂ້ອງໃນລະດັບເມືອງ ເປັນຕົ້ນ ແມ່ນຫ້ອງການກະສິ ກຳ ແລະ ປ່າໄມ້ ເມືອງ, ສະຫະພັນແມ່ຍິງ, ການຄ້າ ແລະ ອື່ນໆ ເປັນຕົ້ນ; ລາຍລະອຽດຂອງແຕ່ລະເຂດນິເວດມີດັ່ງນີ້:

**<u>ເຂດນິເວດ 1</u>: ເຂດພູສູງທີ່ມີຄວາມຄ້ອຍຊັນແຮງ ເປັນເຂດປ່າປ້ອງກັນ.**

**High elevation steeply sloping protection zone**

| | |
|---|---|
| 1. ສະພາບທີ່ຕັ້ງ | - ກວມເອົາ 4 ກຸ່ມບ້ານພັດທະນາ ໃນບໍລິເວນເຂດພູສູງຊັນ<br>- ສູງຈາກລະດັບນ້ຳທະເລ ປະມານ 700 - 1500 ແມັດ. |
| 2. ສະພາບພື້ນທີ່ | - ຄວາມຄ້ອຍຊັນ ປະມານ 40˚- 50˚ |
| 3. ສະພາບດິນ | - ເປັນດິນແດງແກມຫີນ. |
| 4. ອາກາດ | - ລະດູແລ້ງຊ່ວງເດືອນ 11 03<br>- ລະດູຝົນຊ່ວງເດືອນ 04 - 10<br>- ນ້ຳໝອກກ້າມ ໃນ 5 -10 ປີໃດ ມີເທື່ອໜຶ່ງ ໃນຊ່ວງເດືອນ 1 - 2 |
| 5. ຄວາມປົກຫຸ້ມຂອງປ່າໄມ້ | - ກວມເອົາປະມານ 60% ຂອງພື້ນທີ່.<br>- ປະກອບມີ: ໄມ້ປ່ອງ, ໄມ້ກວາງແດງ, ແດງນ້ຳ, ໄມ້ດູ່, ໄມ້ກໍ່, ໄມ້ເຕັນ, ໄມ້ຊໍ້<br>- ເປັນປ່າປ້ອງກັນ. |

| | |
|---|---|
| 6. ປະເພດເຄື່ອງປ່າຂອງດົງ | -ເປືອກເມືອກ, ໝາກຕາວ, ແຂມ, ປໍສາ, ຈັນໃດ, ໄມ້ປ່ອງ, ຫຍ້າໃບລາຍ, ໃບໝ້ຽງ ແລະ ໝາກແໜ່ງ. |
| 7. ສະພາບສັດນ້ຳ | - ເຕົ່າ, ປູລູ, ປາຄໍ່, ປາພັນ, ກຸ້ງ, ຫອຍ, ປາມ້ອມ, ປາຂີງ, ປູແປງ ແລະ ປາຝາອອງ. |
| 8. ສັດປ່າ | - ເສືອ, ລີງ, ຄ່າງ, ກະທິງ, ເຍືອງ, ກວາງ, ຟານ, ກະຮອກ, ໝາປ່າ, ເໜັ້ນ, ເມີຍ, ນົກຂິວ, ນົກຍູງ, ນົກແກງ, ໄກ່ປ່າ. |
| 9. ການນຳໃຊ້ທີ່ດິນ | - ເຮັດໄຮ່ເລື່ອນລອຍ 90%, ລ້ຽງສັດ (ສັດໃຫຍ່), ປ່າປ້ອງກັນ, ປ່າຊົມໃຊ້ ແລະ ປ່າສະຫງວນ (ບ້ານ) |
| 10. ລະບົບການຜະລິດກະສິກຳ | - ເຮັດໄຮ່ເຄື່ອນຍ້າຍ(ເຂົ້າ, ສາລີ, ໝາກງາ, ຖົ່ວແຮປ່ອຍຄັ່ງ, ໝາກແຕງ, ໝາກພັກ, ໝາກນ້ຳ.) |
| 11. ພື້ນຖານໂຄງລ່າງ | - ມີເສັ້ນທາງຍ່າງ, ເສັ້ນທາງລົດເຂົ້າເຖິງ 20 %<br>- ມີສາຍນ້ຳ ແລະ ລຳທານ.<br>- ມີໂຮງຮຽນ (ປໍ 1-5)<br>- ມີຕູ້ຢາປະຈຳບ້ານ.<br>- ສາມາດຮັບຄື້ນວິທະຍຸກະຈາຍສຽງຈາກລາວ ແລະ ໄທ. |
| 12. ການປົກຄອງ ແລະ ພົນລະເມືອງ | - ຂະມຸ 60 %, ລະເມດ 30 % ແລະ ມົ້ງ 10 % |
| 13. ວິຖີການດຳລົງຊີວິດ | - ຂະມຸ: ເຮັດໄຮ່, ລ້ຽງສັດ, ລ່າເນື້ອ, ຈັກສານ, ຄ້າຂາຍຍ່ອຍ, ນັບຖືຜີ ( ເຮັດບຸນກະເຼີ )<br>- ລະເມດ: ເຮັດໄຮ່, ລ້ຽງສັດ, ລ່າເນື້ອ, ເກັບເຄື່ອງປ່າຂອງດົງ, ຜູ້ຍິງເຮັດວຽກຫຼາຍກວ່າຜູ້ຊາຍ ນັບຖືຜີ ( ເຮັດບຸນກະເຼີ )<br>- ມົ້ງ: ເຮັດໄຮ່, ລ້ຽງສັດ, ຈັກສານ, ຫຍິບແສ່ວ, ນັບຖືຜີ ( ເຮັດບຸນກິນຈຽງ ) |
| 14. ຖານະຄວາມທຸກຍາກ | - ກຸ້ມກິນ: ເຂົ້າ, ສັດລ້ຽງ, ຄ້າຂາຍ 10%<br>- ປານກາງ: ເຂົ້າພໍກຸ້ມກິນ 40%<br>- ທຸກຍາກ: ຂາດເຂົ້າກິນ (5 ເດືອນ) 50 %. |
| 15. ໂອກາດໃນການພັດທະນາ | - ມີເນື້ອທີ່ດິນທຳກິນ (ລ້ຽງສັດ-ປູກຝັງ)<br>- ມີແຮງງານ<br>- ມີຕະຫຼາດ<br>- ມີເສັ້ນທາງບາງບ້ານ<br>- ມີແນວພັນພືດສັດ<br>- ມີຊັບພະຍາກອນທຳມະຊາດ ( ຄື່ອງປ່າຂອງດົງ )<br>- ມີສຶກສາ ແລະ ສາທາລະນະສຸກ |
| 16. ທ່າແຮງຕົ້ນຕໍ | - ລ້ຽງສັດໃຫຍ່ (ຈັດສັນພື້ນທີ່ລ້ຽງສັດ)<br>- ປູກພືດ ( ຂີງ, ໝາກງາ, ໝາກເດືອ )<br>- ປູກໄມ້ອຸດສາຫະກຳ ( ຢາງພາລາ, ເປືອກບົງ, ເປືອກເມືອກ, ປໍສາ )<br>- ເຄື່ອງປ່າຂອງດົງ ເປືອກບົງ, ເປືອກເມືອກ, ປໍສາ, ໝາກຕາວ, ໝາກແໜ່ງ, ແຂມ (ອະນຸລັກ, ຈັດສັນ ແລະ ປູກເສີມ ) |
| 17. ຂໍ້ຈຳກັດ | - ຂາດການຈັດສັນປ່າໄມ້ປ້ອງກັນແຫຼ່ງນ້ຳ |

| | |
|---|---|
| | - ຂາດຂໍ້ມູນຂ່າວສານ<br>- ສຶກສາ, ສາທາ, ກະສິກຳ-ປ່າໄມ້<br>- ການຕັ້ງຖິ່ນຖານຂອງບ້ານແມ່ນຫ່າງໄກສອກຫຼີກ; ການໄປມາຫາສູ່ກັນລະຫວ່າງ ບ້ານ ຕໍ່ ບ້ານ ພົບຄວາມຫຍຸ້ງຍາກ<br>- ການເຊື່ອຖືຮີດເກົ່າຄອງເດີມ.<br>- ກຳນົດຂອບເຂດທີ່ດິນກະສິກຳ-ປ່າໄມ້ ຍັງບໍ່ທັນເປັນລະບົບ |
| 18. ໂຄງການທີ່ໄດ້ຈັດຕັ້ງຜ່ານມາ | - NCA ສົ່ງເສີມ ປູກຝັງ ແລະ ລ້ຽງສັດ<br>- CONSERN ສົ່ງເສີມ ປູກຝັງ, ລ້ຽງສັດ ແລະ ໂຄງລ່າງ |
| 18. ບໍລິສັດທີ່ໄດ້ລົງທຶນ | - ເຈ່ຍຝົງ ຈາກ ສປ ຈີນ ( ຢາງພາລາ ) |
| 19. ກຸ່ມບ້ານພັດທະນາ ແລະ ບ້ານ | |

❖ **ການຈັດລຽງບັນຫາ**

1. ຂາດເຂົ້າກິນ
2. ດິນທຳການຜະລິດເຊື່ອມຄຸນນະພາບ
3. ການຄຸ້ມຄອງນຳໃຊ້ດິນບໍ່ເປັນລະບົບ
4. ບໍ່ມີນ້ຳໃຊ້ພຽງພໍ
5. ບໍ່ມີການຈັດສັນເນື້ອທີ່ທຳການຜະລິດ
6. ການຂຸດຄົ້ນນຳໃຊ້ຊັບພະຍາກອນປ່າໄມ້ແບບດັບສູນ ໂດຍສະເພາະ ແມ່ນ ຄປດ (ບໍ່ມີການອານຸລັກ)
7. ເສັ້ນທາງຄົມະນາຄົມບໍ່ສະດວກ
8. ບໍ່ມີພໍ່ຄ້າມາເກັບຊື້ສິນຄ້າ
9. ຂາດຂໍ້ມູນຂ່າວສານ
10. ຂາດການເຕົ້າໂຮມບ້ານ(ບ້ານຢູ່ກະແຈກກະຈາຍ)
11. ຂາດແນວພັນພືດ, ພັນສັດ
12. ຂາດເຕັກວິຊາການ
13. ຜົນຜະລິດຕົກຕ່ຳ
14. ພະຍາດສັດລະບາດ
15. ແມ່ຍິງເຮັດວຽກຫຼາຍກ່ວາຜູ້ຊາຍ
16. ຂາດທືນຮອນທຳການຜະລິດ

## ສັງລວມບັນຫາ, ສາຍເຫດແຕ່ລະບັນຫາ, ຂໍ້ຈຳກັດ ແລະ ໂອກາດພັດທະນາໃນອານາຄົດ

| ບັນຫາຕົ້ນຕໍ | ສາຍເຫດ | ໂອກາດພັດທະນາ | ຂໍ້ຈຳກັດ |
|---|---|---|---|
| *** ບັນຫາຕົ້ນຕໍ** | | | |
| 1. ຂາດເຂົ້າກິນ | 1.ດິນຂາດຄວາມອຸດົມສົມບູນ<br>2.ມີລູກຫຼາຍຄົນ<br>3.ບໍ່ມີລາຍໄດ້ເສີມ(ການຜະລິດບໍ່ເປັນສິນຄ້າ) | 1. ສາມາດປູກພືດຕະກຸນຖົ່ວເພື່ອປັບປຸງດິນ<br>2. ວາງແຜນຄອບຄົວ(ລູກຫ່າງ) | 1. ພື້ນທີທຳການຜະລິດສູງຊັນ |
| 2. ດິນທຳການຜະລິດເຊື່ອມຄຸນນະພາບ | 1.ບໍ່ມີການປູກພືດປັບປຸງດິນ<br>2.ດິນມີການເຊາະລ້າງ | 1.ສາມາດປູກພືດປັບປຸງດິນ<br>2.ປູກພືດເປັນແລວຕ້ານເຈື່ອນ(ໝາກນັດ,ຂ່າ,....) | 1.ຂາດເຕັກນິກໃນການປັບປຸງດິນ |
| 3. ການຄຸ້ມຄອງນຳໃຊ້ດິນບໍ່ເປັນລະບົບ | 1.ບໍ່ມີລະບຽບການນຳໃຊ້ດິນຢ່າງຖືກຕ້ອງ | 1.ຂະແໜງການທີ່ກ່ຽວຂ້ອງຕ້ອງລົງສູ່ຮາກຖານເພື່ອສ້າງລະບຽບ,ໃນການຄຸ້ມຄອງທີດິນ | 1.ຂາດງົບປະມານໃນການລົງຈັດຕັ້ງປະຕິບັດຢ່າງຖົ່ວ |
| 4. ບໍ່ມີນ້ຳໃຊ້ພຽງພໍ | 1.ຍ້ອນການທຳລາຍປ່າໄມ້<br>2.ບໍ່ມີການຈັດສັນແຫ່ລງນ້ຳຂາ | 1.ວິຊາການສາມາດລົງເຜີຍແຜ່ກ່ຽວກັບຄວາມສຳຄັນຂອງປ່າໄມ້ຕໍ່ສິ່ງທີ່ມີຊີວິດແລະສິ່ງແວດລ້ອມ<br>2.ກຳນົດເຂດປ່າຮັກສາແຫ່ລງນ້ຳ ພ້ອມທັງສາລະ | 1.ປະຊາຊົນບໍ່ທັນໄດ້ເຊື່ອມຊຶມຄວາມສຳຄັນຂອງປ່າໄມ້ |

| | | | |
|---|---|---|---|
| | ດແຫຼ່ງນ້ຳ | ບຽບເພື່ອຄຸ້ມຄອງ | |
| 5.ບໍ່ມີການຈັດສັນເນື້ອທີ່ທຳການຜະລິດ | 1. ບໍ່ມີເສັ້ນທາງຄົມມະນາຄົມເຂົ້າເຖິງ | 1. ສາມາດຈັດສັນເນື້ອທີ່ທຳການຜະລິດ | 1. ຂາດງົບປະມານໃນການລົງຈັດຕັ້ງປະຕິບັດ |
| 6.ການຂຸດຄົ້ນນຳໃຊ້ຊັບພະຍາກອນປ່າໄມ້ແບບດັບສູນ(ບໍ່ມີການອານຸລັກ) | 1.ຍ້ອນເຫນໄດ້ແຕ່ປະໂຫຍດສ່ວນຕົວ | 1. ສາມາດລົງເຜີຍແຜ່ເຖິງຜົນກະທົບຂອງການຂຸດຄົ້ນແບບດັບສູນ<br>2.ມີການຈັດສັນພື້ນທີເຄື່ອງປ່າຂອງດົງແລະພ້ອມທັງປູກເສີມກ້ອງປ່າ | 1. ຂາດຄວາມຮູ້ທັງດ້ານການຂຸດຄົ້ນ |
| 7. ເສັ້ນທາງຄົມະນາຄົມບໍ່ສະດວກ | 1.ຂາດງົບປະມານໃນການທະລຸເສັ້ນທາງເຂົ້າເຖິງບ້ານ<br>2.ການຕັ້ງບ້ານຢູ່ແຈກກະຈາຍ | 1. ມີເສັ້ນທາງຢາງແລະສາມາດລົງສຳຫຼວດບຸກເບີກ | 1. ຂາດງົບປະມານ |
| 8.ບໍ່ມີພໍ່ຄ້າມາເກັບຊື້ສິນຄ້າ | 1. ເສັ້ນທາງລົດເຂົ້າບໍ່ເຖິງ<br>2.ການຜະລິດຍັງບໍ່ເປັນສິ້ນຄ້າ<br>-ຜະລິດພຽງແຕ່ຮັບໃຊ້ຄອບຄົວ | 1. ເຜີຍແຜ່ຂໍ້ມູນຂ່າວສານດ້ານການຕະຫຼາດ | 1.ພື້ນທີຄ້ອຍຊັນ<br>2.ການຕັ້ງບ້ານກະແຈກກະຈາຍ |
| 9. ຂາດຂໍ້ມູນຂ່າວສານ | 1. ບ້ານຢູ່ຫ່າງໄກສອກຫຼີກ | 1.ພະນັກງານວິຊາການສາມາດລົງຮາກຖານເພື່ອໂຄສະນາເຜີນແຜ່ | 1. ບໍ່ເຂົ້າໃຈພາສາລາວລຸ່ມ |
| 10. ຂາດການເຕົ້າໂຮມບ້ານ(ບ້ານຢູ່ກະແຈກກະຈາຍ) | 1.ຕັ້ງບ້ານຢູ່ຈຸ້ມເຈື້ອ<br>2.ດິນຟ້າອາກາດມີການປ່ຽນແປງ(ແຫ້ງແລ້ງຂາດນ້ຳໃຊ້) | 1.ເຕົ້າໂຮມບ້ານນ້ອຍເປັນບ້ານໃຫ່ຍ | 1.ມີແນວຄິດຄອງເດີມ |
| 11. ຂາດແນວພັນພືດ, ພັນສັດ | 1. ບໍ່ມີເງິນຊື້ແນວພັນໃໝ່<br>2.ສັດຕາຍຫ່າ | 1. ມີແນວພັນປັບປຸງຂາຍ | 1. ຂາດທຶນຮອນ |
| 12.ຂາດເຕັກວິຊາການ | 1.ຍ້ອນບໍ່ພະນັກງານລົງຊີ້ນຳ | 1.ຝຶກອົບຮົມ ແລະທັດສະນະສຶກສາ | 1.ບໍ່ມີຄວາມຮູ້ທັງດ້ານກະສິກຳແລະປ່າໄມ້ |
| 13.ຜົນຜະລິດຕົກຕ່ຳ | 1.ດິນບໍ່ອຸດົມສົມບູນ<br>2.ນຳໃຊ້ແນວພັນດັ່ງເດີມ<br>3.ຂາດເຕັກວິທີການປັບປຸງດິນ | 1.ປັບປຸງດິນ<br>2.ປັບປຸງແນວພັນ | 1.ບໍ່ໄດ້ຮັບການຝຶກອົບຮົມ |
| 14.ພະຍາດສັດລະບາດ | 1.ບໍ່ມີການຊັກຢາປ້ອງກັນພະຍາດ<br>2.ລ້ຽງສັດຊະຊາຍ | 1.ຝຶກອົບຮົມສັດຕະວະແພດຂັ້ນບ້ານ<br>2.ສະໜອງຢາວັກຊີນໃຫ້ເປັນປົກກະຕິ<br>3.ໂຄສະນາຄວາມຮູ້ທັງດ້ານການປ້ອງກັນແລະສັກຢາປ້ອງກັນ | 1.ບໍ່ມີສັດຕະວະແພດຂັ້ນບ້ານ |
| 15.ແມ່ຍິງເຮັດວຽກຫຼາຍກ່ວາຜູ້ຊາຍ | 1.ບໍ່ມີການວາງແຜນ | 1.ໂຄສະນາເຜີຍແຜ່ບົດບາດຍິງ-ຊາຍ | |
| 16.ຂາດທຶນຮອນທຳການຜະລິດ | 1.ຍ້ອນຄອບຄົວທຸກຍາກ | 1.ມີການລົງທຶນຈາກຫຼາຍພາກສ່ວນສົ່ງເສີມທັງດ້ານການປູກຝັງລ້ຽງ<br>2.ມີນະໂຍບາຍໃຫ້ກູ້ຢືມຈາກທະນາຄານສິ້ນເຊື່ອ | |

ເຂດນິເວດ 2: ເຂດເນີນສູງທີ່ມີຄວາມຄ້ອຍຊັນປານກາງ, ເປັນເຂດນຳໃຊ້ຜະລິດກະສິກຳ ປ່າໄມ້ ແບບປະສົມປະສານ.

**Mid elevation moderately sloping, Agro – forest production zone.**

| | |
|---|---|
| 1. ທີ່ຕັ້ງ | - ເປັນເຂດທີ່ກວມ 40% ຂອງເນື້ອທີ່ແຕ່ເໜືອຮອດໄຕ້<br>- ລະດັບຄວາມສູງຈາກໜ້ານ້ຳທະເລ 500 - 999 ແມັດ |
| 2. ສະພາບພື້ນທີ່ | - ມີຄວາມຄ້ອຍຊັນ ສູງ 30 - 35 % |
| 3. ສະພາບດິນ | - ເປັນດິນແດງ, ແດງແກບຫີນ(ໜຽວ) |
| 4. ສະພາບພູມອາກາດ | - ອຸນຫະພູມສະເລ່ຍ 18˚C (5 -10 ປີຈະເຫັນນ້ຳມອກກ້າມ)<br>- ລະດູຝົນເລີ່ມແຕ່ທ້າຍເດືອນມິຖຸນາ 6 ຫາ ທ້າຍເດືອນຕຸລາ 10<br>- ລະດູແລ້ງເລີ່ມແຕ່ຕົ້ນເດືອນພະຈິກ 11 ຫາທ້າຍເດືອນພຶດສະພາ 5 |
| 5.ຄວາມປົກຫຸ້ມປ່າໄມ້(ປະເພດປ່າ) | - ມີປ່າໄມ້ປະສົມ ( ໄມ້ບົງ, ໄມ້ຊາງ, ໄມ້ຈິງຫຼາຍກວ່າໝູ່ )<br>- ປ່າປ້ອງກັນກວມກວມ ປະມານ 10 %<br>- ປ່າຜະລິດກວມປະມານ 90 % ( ເຮັດໄຮ່ ) |
| 6. ປະເພດເຄື່ອງປ່າຂອງດົງ | - ເຄື່ອງປ່າດົງມີການຫຼຸດລົງຈາກເດີມເຊັ່ນ:ແຂມ,ປໍສາ, ເປືອກເມືອກ, ໝາກຕາວ, ຈັນໃດ, ຫວາຍ, ດ້ອງແມ້, ໜໍ່ໄມ້ (ໜໍ່ຊາງ, ໜໍ່ຂົມ, ໜໍ່ບົງ, ໜໍ່ໄລ່, ໜໍ່ເຮ້ຍ) ເຫັດ ( ເຫັດແດງ, ເຫັດຂາວ, ເຫັດປວກ, ເຫັດຄີນ ) |
| 7. ສະພາບສັດນ້ຳ | - ສ່ວນໃຫຍ່ແມ່ນມີຢູ່ຕາມຫ້ວຍ, ນ້ຳຫາ, ນ້ຳຮາດເຊັ່ນ: ປາມອນ, ປາຂິງ, ປາຂາວ, ປາຄໍ່, ປາດຸກ...ແຕ່ປະຈຸບັນນີ້ຈຳນວນສັດນ້ຳດັ່ງກ່າວໄດ້ມີການຫຼຸດລົງ |
| 8. ສະພາບສັດປ່າ | - ໝູປ່າ, ໄກ່ປ່າ, ຟານ, ກວາງ, ງູເຫຼືອມ, ງູສິງ, ເຫງັນ, ຮອກ, ປະເພດນົກມີ ນົກຂີວນົກເຄົ້າ ແຕ່ປະຈຸບັນນີ້ຈຳນວນສັດນ້ຳດັ່ງກ່າວໄດ້ມີການຫຼຸດລົງ |
| 9. ການນຳໃຊ້ທີ່ດິນໃນປະຈຸບັນ | - ໄຮ່ມີປະມານ 40% (ໄຮເຂົ້າ)<br>- ປ່າເລົ່າປະມານ 50 %<br>- ປ່າປູກ 10 % ໄມ້ສັກ ແລະ ຢາງພາລາ |
| 10. ລະບົບການຜະລິດກະສິກຳ | - ເຮັດໄຮ່ເປັນຕົ້ນຕໍ<br>- ປູກໝາກງາ,ສາລີ,ມັນຕົ້ນ,ໝາກອື, ມັນດ້າງ, ໝາກແຕງ...<br>- ເກັບເຄື່ອງປ່າຂອງດົງ |
| 11. ພື້ນຖານໂຄງລ່າງ | - ມີເສັ້ນທາງເຂົ້າເຖິງບ້ານໄດ້ລະດູດຽວ ( ລະດູແລ້ງ )<br>- ມີຕູ້ຢາປະຈຳບ້ານແຕ່ລະບ້ານ<br>- ແຕ່ລະບ້ານມີໂຮງຮຽນໝວດປະຖົມສົມບູນ(ປໍ1-ປໍ5)<br>- ມີໂຮງຮຽນມູນລະປະຖົມ(ປໍ1-ປໍ3) |
| 12. ຊົນເຜົ່າ | - ມີ 3 ເຜົ່າ: ຂະມຸ, ລະເມດ, ມົ້ງ |
| 13. ວິຖີການດຳລົງຊີວິດ | - ເຮັດໄຮ່ເປັນຕົ້ນຕໍ<br>- ຫາເຄື່ອງປ່າຂອງດົງ, ລ່າສັດ ແລະ ຫາປາ<br>- ເພດຍິງຕຳຫູກທໍໄໝ<br>- ເພດຊາຍຈັກສານ ແລະ ຕີເຫຼັກ<br>- ຂະມຸ: ອາໃສຢູ່ເນີນພູ ຮີດຄອງປະເພນີນັບຖືສາດສະໜາ ຜີ(ເຮັດບຸນກະເຈີ) ຕັ້ງເຮືອນເປັນກຸ່ມພີ່ນ້ອງ ສະເລ່ຍ 5-7 ຄອບຄົວເປັນກຸ່ມໜຶ່ງ<br>- ເຜົ່າລະເມດແມ່ນຄືກັນກັບເຜົ່າຂະມຸ |

| | |
|---|---|
| | - ມົ້ງ: ອາໃສຢູ່ເຂດເນີນພູ ແລະ ພູສູງຢູ່ເປັນກຸ່ມເຊື້ອສາຍດຽວກັນ ຖືສາດສະໜາຜີ ( ເຮັດບຸນກິນຈຽງ ) |
| 14. ຖານະຄວາມທຸກຍາກ | - ຄອບຄົວທຸກຍາກມີປະມານ 70 %<br>- ຄອບຄົວກຸ້ມກິນມີປະມານ 23 %<br>- ຄອບຄົວເຫຼືອກິນມີປະມານ 7 % |
| 15.ໂອກາດການພັດທະນາ | - ປູກສາລີ, ໝາກງາ, ມັນຕົ້ນ ແລະ ໝາກເຜັດ...<br>- ລ້ຽງສັດ: ງົວ, ຄວາຍ, ແບ້, ໝູ ແລະ ສັດປີກ<br>- ເຄື່ອງປ່າຂອງດົງ: ປໍສາ, ແຂມ, ເປືອກເມືອກ, ຫວາຍ, ໝາກຕາວ, ໜໍ່ຂົມ, ໜໍ່ຊາງ... |
| 16. ທ່າແຮງຕົ້ນຕໍ | - ມີເນື້ອທີ່ທຳການຜະລິດຫຼາຍ<br>- ສາມາດຂະຫຍາຍການລ້ຽງສັດໃຫຍ່, ສັດປີກ<br>- ມີຕະຫຼາດເກັບຊື້ສິນຄ້າ ( ລາຄາບໍ່ປົກກະຕິ )<br>- ມີເຄື່ອງປ່າຂອງດົງຫຼາຍ<br>- ຫັດຖະກຳ ( ຈັກສານ ) |
| 17. ຂໍ້ຈຳກັດທາງດ້ານພັດທະນາ | - ບໍ່ໄດ້ຮັບຂໍ້ມູນຂ່າວສານ<br>- ການສຶກສາຍັງຕ່ຳ ( ແມ່ຍິງ )<br>- ຂາດທຶນຮອນໃນການຜະລິດ<br>- ພື້ນທີ່ຄ້ອຍຊັນ<br>- ເສັ້ນທາງລົດເຂົ້າໄປເຖິງລະດູດຽວ<br>- ບໍ່ມີນ້ຳດື່ມທີ່ສະອາດໃຊ້ ( ນ້ຳລິນ )<br>- ຂາດການນຳໃຊ້ເຕັກນິກທີ່ເໝາະສົມ<br>- ບົດບາດຍິງຊາຍ ( ແມ່ຍິງເຮັດວຽກຫຼາຍກວ່າຜູ້ຊາຍ ) |
| 18.ໂຄງການທີ່ໄດ້ຈັດຕັ້ງປະຕິບັດ | - ໂຄງການ RDMA ສົ່ງເສີມ:ປູກຝັງ,ລ້ຽງສັດ, ແລະ ສຶກສານອກລະບົບ<br>- ໂຄງການ NCA ສົ່ງເສີມ:ປູກຝັງ,ລ້ຽງສັດ |
| 19.ບໍລິສັດທີ່ໄດ້ລົງທຶນ | - ບໍລິສັດຫົວຂອງພັດທະນາກະສິກຳມາລົງທຶນ ແລະ ເກັບຊື້ກ່ຽວກັບການປູກສາລີ ແລະ ໝາກງາ...( ເຄື່ອງປ່າຂອງດົງ ) |
| 20.ກຸ່ມບ້ານພັດທະນາ ແລະ ບ້ານ | ມີ 13 ກຸ່ມບ້ານ ແລະ 28 ບ້ານ ພັດທະນາ<br>1. ກຸ່ມບ້ານວຽງພັດທະນາ<br>- ບ້ານ ວຽງພັດທະນາ<br>- ບ້ານ ພູໂທ<br>2. ກຸ່ມບ້ານເດື່ອ<br>- ບ້ານ ເດື່ອ<br>- ບ້ານ ຂີງຄຳ<br>- ບ້ານ ກະລົມ<br>3. ກຸ່ມບ້ານພູວຽງ<br>- ບ້ານ ມົກປອນ<br>- ບ້ານ ພຽງຫາດ<br>4. ກຸ່ມບ້ານຫາດໜາມ<br>8. ກຸ່ມບ້ານ ສຸກຈະເລີນ<br>- ບ້ານ ຕະພູ<br>9. ກຸ່ມບ້ານດອນຄຳ<br>- ບ້ານ ດອນຄຳ<br>- ບ້ານ ນາຄູນ<br>10. ກຸ່ມບ້ານຜາອຸດົມ<br>- ບ້ານ ໂພນໄຊ<br>- ບ້ານ ນາທົ່ງ<br>11. ກຸ່ມບ້ານໂຮມສຸກ<br>- ບ້ານ ມົກສຸກ<br>12. ກຸ່ມບ້ານປາງທອງ |

| | |
|---|---|
| | - ບ້ານ ຫາດໜາມ<br>- ບ້ານ ພູສູງ<br>5. ກຸ່ມບ້ານເພັງ<br>- ບ້ານ ຜາຊ້າງ<br>- ບ້ານ ຄາກຄຳ<br>6. ກຸ່ມບ້ານຫາງດອຍ<br>- ບ້ານ ລະອາງໃຕ້<br>- ບ້ານ ຕະກຸ<br>- ບ້ານ ຫາງດອຍ<br>7. ກຸ່ມບ້ານເກີນ<br>- ບ້ານ ໂພນວິໄລ<br>- ບ້ານ ຖາວອນໄຊ<br>- ບ້ານ ຫ້ວຍແປ້ນ<br>- ບ້ານ ຕີນຜາ<br>13. ກຸ່ມບ້ານບ່ອງ<br>- ບ້ານ ບ່ອງເຫີງ |

❖ **ການຈັດບູລິມະສິດບັນຫາຕົ້ນຕໍໃນເຂດນິເວດ 2:**

1. ບັນຫາດ້ານທີ່ດິນ
2. ດ້ານລະບົບການຜະລິດກະສິກຳ ປ່າໄມ້
3. ຊັບພະຍາກອນປ່າໄມ້
4. ລະບົບການຕະຫຼາດ
5. ບົດບາດຍິງ-ຊາຍ
6. ຂາດການວາງແຜນໃນຄອບຄົວ
7. ຄົມມະນາຄົມ
8. ການສຶກສາ

| ບັນຫາຕົ້ນຕໍ | ສາເຫດ | ວິທີແກ້ໄຂ | ໂອກາດ | ຂໍ້ຈຳກັດ |
|---|---|---|---|---|
| **I. ດ້ານທີ່ດິນ** | | | | |
| 1. ດິນທຳການຜະລິດບໍ່ເໝາະສົມ | - ດິນມີຄວາມຄ້ອຍຊັນ<br>- ຮອບວຽນທຳການຜະລິດສັ້ນ<br>( ອາຍຸປ່າເລົ່າສັ້ນລົງ ) | - ເຮັດໄຮ່ຄົງທີ່ | - ມີເນື້ອທີ່ດິນ | - ພື້ນທີ່ມີຄວາມຄ້ອຍຊັນ |
| 2. ດິນການຜະລິດບໍ່ທັນໄດ້ຈັດສັນ | - ຍັງບໍ່ໄດ້ສຳຫຼວດຈັດສັນແບ່ງດິນແບ່ງປ່າ<br>- ການຕັ້ງຖິ່ນຖານພູມລຳເນົາບໍ່ຄົງທີ່ | - ການຈັດສັນ, ແບ່ງດິນ-ແບ່ງປ່າ<br>- ເຕົ້າໂຮມບ້ານນ້ອຍເປັນບ້ານ ໃຫຍ່ | - ມີເນື້ອທີ່ດິນ | - ຂາດງົບປະມານ |
| 3. ດິນບໍ່ມີຄຸນນະພາບ | - ດິນມີການເຊາະເຈື່ອນ<br>- ມີການຖາງປ່າ ເຮັດໄຮ່ແບບເລື່ອນລອຍ<br>- ດິນບໍ່ໄດ້ຮັບການປັບປຸງ | - ປັບປຸງດິນ<br>- ປູກພືດໝູນວຽນ<br>- ຢຸດຕິການຖາງປ່າເຮັດໄຮ່ | - ມີເຕັກນິກວິຊາການ<br>- ມີຝຸ່ນຄອກ | - ຂາດງົບປະມານ |
| **II. ດ້ານລະບົບການຜະລິດກະສິກຳ ປ່າໄມ້** | | | | |
| **1. ດ້ານລະບົບລ້ຽງສັດ** | | | | |
| 1. ພະຍາດສັດລະບາດ | - ລ້ຽງສັດປ່ອຍຊະຊາຍ | - ສ້າງຕາໜ່າງສັດຕະວະແພດ ບ້ານ | - ມີສັດຕະວະແພດບ້ານ | - ສັດບໍ່ໄດ້ສັກຢາ<br>- ວິຊາການສັດຕະວະແພດບໍ່ພຽງພໍ |
| 2. ຂາດພືດອາຫານສັດ | - ພື້ນທີ່ຄ້ອຍຊັນ, ແຫ້ງ | - ຈັດຂອບເຂດລ້ຽງສັດ | - ມີພື້ນທີ່ປູກຫຍ້າ | |

| | | | | |
|---|---|---|---|---|
| ໃນຍາມແລ້ງ<br><br>4. ຂາດສັດລ້ຽງ | ແລ້ງ<br>- ບໍ່ມີເງິນຊື້ແນວພັນໃໝ່<br>- ສັດຕາຍຫ່າ | - ປູກພືດອາຫານສັດ<br>- ປັບປຸງທົ່ງຫຍ້າ<br>- ມີແນວພັນປັບປຸງໃໝ່ຂາຍ | - ມີກເງິນກອງທືນຂອງບ້ານ | - ບໍ່ມີແນວພັນຫຍ້າ<br>- ຂາດທືນຮອນ |
| **2. ດ້ານການປູກຝັງ** | | | | |
| 1. ຂາດເຂົ້າກິນ<br><br><br><br>2. ຂາດແນວພັນພືດ<br><br><br>3. ສັດຕູພືດທຳລາຍຜົນຜະລິດ<br><br><br>4. ການຜະລິດແບບທຳມະຊາດ | - ຜົນຜະລິດຕົກຕ່ຳ<br>+ ສັດຕູພືດທຳລາຍ<br>+ ດິນບໍ່ງາມ<br>+ ຍ້ອນແນວພັນດັ່ງເດີມ<br>- ບໍ່ມີເງິນຊື້ແນວພັນໃໝ່<br>- ພືດເປັນພະຍາດ ແລະ ສັດຕູພືດທຳລາຍຜົນລະປູກ<br>- ປູກບໍ່ເປັນລະບົບປູກກະແຈກ ກະຈ່າຍ<br>- ອາໃສແຕ່ທຳມະຊາດ<br><br>- ຖືຮີດຄອງເດີມ | - ຍົກສະມັດຕະພາບຜົນຜະ ລິດ<br>- ເຮັດການຜະລິດໃຫ້ຖືກຕາມ ລະດູການ<br>- ມີແນວພັນປັບປຸງໃໝ່ຂາຍ<br>- ຈັດລະບົບ ແລະ ຮູບແບບ ການຜະລິດ<br>- ປູກໃຫ້ຖືກຕາມເຕັກນິກ ແລະ ຕາມລະດູການຜະລິດ<br>- ເຜີຍແຜ່ຂໍ້ມູນຂ່າວສານດ້ານການຜະ ລິດ | - ມີພື້ນທີ່ທຳການຜະລິດ: ນາ, ສວນ<br>- ມີແນວພັນປັບປຸງ<br><br>- ມີເງິນກອງທືນຂອງບ້ານ<br><br><br>- ມີພະນັກງານວິຊາການ<br><br><br>- ມີພະນັກງານວິຊາການ | - ຂາດເຕັກນິກການຜະລິດ<br><br><br><br>- ຂາດທືນຮອນ<br><br><br>- ບໍ່ໄດ້ຮັບຂໍ້ມູນຂ່າວສານ<br>- ບໍ່ໄດ້ຮັບການຝຶກອົບຮົມ ແລະ ທັດສະນະ ສຶກສາ<br>- ຂາດງົບປະມານ |
| **III. ຊັບພະຍາກອນປ່າໄມ້** | | | | |
| 1. ເຄື່ອງຂອງດົງຫຼຸດໜ້ອຍຖອຍລົງຫຼາຍ | -ການເກັບເຄື່ອງປ່າຂອງດົງແບບດັບສູນເພື່ອຂາຍ<br>- ບໍ່ໄດ້ຈັດສັນ ແລະ ຄຸມຄອງປ່າ | - ຈັດສັນຟື້ນຟູ, ປູກຂະຫຍາຍເຄື່ອງປ່າຂອງດົງ ແລະ ຄຸມຄອງ | - ມີປະເພດເຄື່ອງປ່າຂອງດົງຕາມທຳມະຊາດ | - ປະຊາຊົນຮູ້ແລ້ວແຕ່ບໍ່ປະຕິບັດຕາມກົດລະບຽບຂອງປ່າໄມ້<br>- ຂາດງົບປະມານໃນການລົງເຮັດວຽກ |
| **IV. ລະບົບການຕະຫຼາດ** | | | | |
| 1. ຕະຫຼາດບໍ່ເຂົ້າເຖິງ | - ການປູກ ແລະ ຜົນຜະລິດບໍ່ ແນ່ນອນ | - ປູກພືດ ແລະ ລ້ຽງສັດເປັນສິນຄ້າ | - ມີພໍ່ຄ້າເກັບຊື້ | - ທາງລົດບໍ່ເຂົ້າເຖິງ<br>- ບໍ່ໄດ້ຮັບຂໍ້ມູນຂ່າວສານ |
| **V. ບົດບາດຍິງ-ຊາຍ** | | | | |
| 1. ຜູ້ຍິງເຮັດວຽກຫຼາຍກວ່າຜູ້ຊາຍ | - ຂາດການວາງແຜນໃນຄອບຄົວ | - ມີການຝຶກອົບຮົມ<br>- ມີການທັດສະນະສຶກສາ | - ມີບົດບາດຍິງ-ຊາຍ | - ບໍ່ໄດ້ຮັບຂໍ້ມູນຂ່າວສານດ້ານບົດບາດຍິງ-ຊາຍ |
| **VI. ຂາດການວາງແຜນໃນຄອບຄົວ** | | | | |
| 1. ຄອບຄົວຂາດການວາງແຜນ | - ຄວາມບໍ່ເຂົ້າໃຈໃນຄອບຄົວ | - ລະດົມແນວຄວາມຄິດ | - ມີພະນັກງານລົງຊຸກຍູ້ | - ການສຶກສາຍັງຕ່ຳ |
| **VII. ຄົມມະນາຄົມ** | | | | |

| | | | | |
|---|---|---|---|---|
| 1. ເສັ້ນທາງເຂົ້າບໍ່ເຖິງ | - ເປັນເຂດຄ້ອຍຊັນ<br>- ການຕັ້ງບ້ານກະແຈກກະຈ່າຍ | - ສຳຫຼວດຄວາມເປັນໄປໄດ້<br>ແລະ ບຸກເບີກເສັ້ນທາງ | - ມີເສັ້ນທາງດັ່ງເດີມ ( ເສັ້ນທາງຍ່າງ ) | - ຂາດງົບປະມານ |
| **VIII. ການສຶກສາ** | | | | |
| **1.** ການສຶກສາຍັງຕ່ຳ | - ຍ້ອນຄວາມບໍ່ເຂົ້າໃຈຂອງຄອບຄົວໃນການຊຸກຍູ້ໃຫ້ມີການສຶກ ສາ ຮ່ຳຮຽນ<br>- ການຕັ້ງບ້ານຫ່າງໄກ ແລະ ກະແຈກກະຈ່າຍ | - ຊຸກຍູ້ໃຫ້ຮຽນໜັງສືສຳລັບຜູ້ກຶກໜັງ ສື | - ມີໂຮງຮຽນຊັ້ນປະຖົມ ແລະ ຄູສິດສອນ | - ຂາດທຶນຮອນ |

<u>ເຂດນິເວດ 3:</u> **ເຂດຕ່ຳບໍລິເວນລ້ອງທີ່ມີຄວາມຄ້ອຍຂ້ອນຂ້າງຮາບພຽງ, ແລະ ນຳໃຊ້ຜະລິດກະສິກຳເປັນຕົ້ນຕໍ.**
**Low elevation, gently sloping agricultural zone**

| | |
|---|---|
| 1. ທີ່ຕັ້ງ | - ລະດັບໜ້ານ້ຳທະເລປະມານ 329-500 ແມັດ.<br>- ຢູ່ຢາງຈະແຈກກະຈາຍ ຕາມເຂດບໍລິເວນລ້ອງແມ່ນ້ຳ.<br>- ນຳໃຊ້ເຂົ້າໃນການເຮັດນາ(ນາປີ ແລະ ນາແຊງ), ປູກພືດເສດຖະກິດ (ສາລີ ຖົ່ວດິນ) ແລະ ລ້ຽງສັດ |
| 2. ສະພາບພື້ນທີ | - ມີລັກສະນະຮາບພຽງຕາມລ້ອງແມ່ນ້ຳ ຈົນເຖິງຫຼຸບໂນນ ທີ່ມີຄວາມຄ້ອຍຊັນປະມານ 15 ອົງສາ.<br>- ເປັນພື້ນທີ່ປ່າເລົ່າ ແລະ ປ່າຜະລິດ ຫຼື ປ່າຊົມໃຊ້.<br>- ພື້ນທີ່ຮາບພຽງສ່ວນຫຼາຍ ແມ່ນຢູ່ຕາມລ້ອງແມ່ນ້ຳ ໄດ້ແກ່: ນ້ຳທາດ, ນ້ຳຄາ ແລະ ນ້ຳລຽງ. |
| 3. ສະພາບດິນ | - ດິນຊາຍແກມຕົມ, ດິນໜຽວ, ດິນດາກ(ມີກະຈາຍຢູ່ທົ່ວຕາມລັກສະນະນິເວດຂອງພື້ນທີ່)<br>- ຕາມລ້ອງແມ່ນ້ຳ ດິນສາມາດເກັບນ້ຳໄດ້ດີ. |
| 4. ສະພາບພູມອາກາດ | - ລະດູໜາວເລີ້ມແຕ່ເດືອນ11 - ເດືອນ3.<br>- ລະດູຮ້ອນເລີ້ມແຕ່ເດືອນ 4 ເຖິງ ເດືອນ 10.<br>- ມີລົມປະຈຳລະດູພັດຜ່ານຕະຫຼອດປີ. |
| 5. ຄວາມປົກຫຸ້ມປ່າໄມ້ (ປະເພດປ່າ) | - ສ່ວນຫຼາຍເປັນປ່າເລົ່າປະມານ 3ປີ ແລະ<br>- ເປັນປ່າຊົມໃຊ້ບ້ານ.<br>- ພື້ນທີ່ສ່ວນໃຫຍ່ເປັນທົ່ງນາ. |
| 6. ປະເພດເຄື່ອງປ່າຂອງດົງ | - ດອກແຂມ.<br>- ເປືອກເມືອກ.<br>- ແລະ ໝາກຕາວ. |
| 7. ສະພາບສັດນ້ຳ | - ປາ(ມີຢູ່ຕາມຫ້ວຍຮອງ ແລະ ນາ)<br>- ອຽນ<br>- ກຸ້ງ |

| | |
|---|---|
| | - ຫອຍປາກກ້ວາງ. |
| 8. ສະພາບສັດປ່າ | - ໝູປ່າ<br>- ນົກ<br>- ໜູ |
| 9. ການນຳໃຊ້ທີ່ດິນໃນປະຈຸບັນ | - ພື້ນທີ່ນາ<br>- ພື້ນທີ່ໄຮ ແລະ ສວນ.<br>- ພື້ນທີ່ປູກໄມ້ອຸດສະຫະກຳ(ໄມ້ເກດສະໜາ, ໄມ້ສັກ ແລະ ຢາງພາລາ).<br>- ກຳນົດເປັນເຂດ ຫຼື ພື້ນທີ່ ລ້ຽງສັດ. |
| 10. ລະບົບການຜະລິດກະສິກຳ | - ການເຮັດນາສອງລະດູ(ແລ້ງ ແລະ ຝົນ), ໄຮ.<br>- ປູກພືດເສດຖະກິດ(ສາລີ, ພືດຕະກຸນຖົ່ວ)<br>- ປູກໄມ້ອຸດສະຫະກຳ (ໄມ້ເກດສະໜາ, ໄມ້ສັກ ແລະ ຢາງພາລາ).<br>- ລ້ຽງສັດປີກໃນລະດັບຄົວເຮືອນ ແລະ ສັດໃຫຍ່ລ້ຽງເປັນເຂດ. |
| 11. ພື້ນຖານໂຄງລ່າງ | - ມີທາງເຂົ້າເຖິງສອງລະດູ(ສະເພາະ ເຂດຜາອຸດົມ, ປາງທອງ, ໂຮມໄຊ ແລະ ເຂດວຽງທອງ)<br>- ມີເສັ້ນທາງເຂົ້າເຖິງລະດູດຽວ(ເຂດໂພນສະອາດ)<br>- ມີສຸກສາລາ 2 ແຫ່ງ(ເຂດໂຮມໄຊ ແລະ ເຂດໂພນສະອາດ)<br>- ມີໂຮງໝໍເມືອງ 1 ແຫ່ງ (ເຂດຜາອຸດດົມ)<br>- ມີຖັງຢາງປະຈຳບ້ານ<br>- ມີນ້ຳລິນ.<br>- ມີເຄືອຄ່າຍໂທລະສັບອິນໂຟນ ແລະ ມີໄຟຟ້ານ້ຳຕົກໃຊ້ (ສະເພາະເທດສະບານ ເມືອງ ຜາອຸດົມ)<br>- ມີໂຮງຮຽນປະຖົມສົມບູນ 9 ແຫ່ງ.<br>- ມີໂຮງຮຽນມັດທະຍົມຕອນຕົ້ນ 2 ແຫ່ງ(ບ້ານ ປຸງລານ; ເຂດໂຮມໄຊ ແລະ ບ້ານຖິ່ນແກ້ວ; ເຂດຜາອຸດົມ)<br>- ໂຮງຮຽນມັດທະຍົມຕອນປາຍ 1 ແຫ່ງ ຢູ່ບ້ານຖິ່ນແກ້ວ; ເຂດຜາອຸດົມ.<br>- ທົ່ວເມືອງມີ ໂຮງຮຽນປະຖົມ 84 ແຫ່ງ. |
| 12. ການປົກຄອງ ແລະ ພົນລະເມືອງ | - ມີ10 ເຂດ, 17ກຸ່ມບ້ານພັດທະນາ(ທົ່ວເມືອງ)<br>- ສະເພາະເຂດນິເວດ 3 ມີ ກວມເອົາ 3 ເຂດປົກຄອງ(ເຂດຜາອຸດົມ, ວຽງ ທອງ ແລະ ໂຮມໄຊ)<br>- ກວມເອົາ 4 ກຸ່ມບ້ານພັດທະນາ(ກຸ່ມປາງທອງ, ກຸ່ມໂຮມສຸກ, ຜາອຸດົມ ແລະ ກຸ່ມບ້ານ ສົມສະຫວ່າງ)<br>- ມີ 6 ຊົນເຜົ່າ: ລາວລຸ່ມ, ມົ້ງ, ຂະມຸ, ລະເມດ, ໄທດຳ, ລື້.<br>- ຄວາມໜາແໜ້ນຂອງພົນລະເມືອງ ແມ່ນຢູ່ໃນລະດັບປານກາງ |
| 13. ວິຖີການດຳລົງຊີວິດ | - ລາວລຸ່ມ: ເຮັດນາ, ຄ້າຂາຍ, ປູກພືດ ແລະ ລ້ຽງສັດ; ນັບຖືສາສະໜາພຸດ. |

| | |
|---|---|
| | - ມົ້ງ: ເຮັດນາ, ຄ້າຂາຍ, ປູກພືດ ແລະ ລ້ຽງສັດ; ນັບຖືສາສະໜາຜີ.<br>- ຂະມຸ: ເຮັດນາ, ໄຮ່, ຄ້າຂາຍ, ປູກພືດ ແລະ ລ້ຽງສັດ; ນັບຖືສາສະໜາຜີ.<br>- ລະເມດ: ເຮັດນາ,ໄຮ, ຄ້າຂາຍ, ປູກພືດ ແລະ ລ້ຽງສັດ; ນັບຖືສາສະໜາຜີ.<br>- ໄທດຳ: ເຮັດນາ, ໄຮ, ຄ້າຂາຍ, ປູກພືດ ແລະ ລ້ຽງສັດ; ນັບຖືສາສະໜາຜີ.<br>- ລື້: ເຮັດນາ, ໄຮ, ຄ້າຂາຍ, ປູກພືດ ແລະ ລ້ຽງສັດ; ນັບຖືສາສະໜາຜີ. |
| 14.ຊົນເຜົ່າ | - ລວມເອົາ 6 ຊົນເຜົ່າ:<br>o ຂະມຸ<br>o ລະເມດ.<br>o ລື້<br>o ລາວລຸ່ມ<br>o ມົ້ງ<br>o ໄທດຳ |
| 15. ໂອກາດໃນການພັດທະນາ | - ປັບປຸງຍົກສະມັດຕະພາບການເຮັດນາ(ສາມາດເຮັດໄດ້ສອງລະດູ) ໂດຍໃຊ້ຕະນ່າງຊົນລະປະທານ.<br>- ສຸ່ມໃສ່ປູກພືດເປັນສິນຄ້າ ເຊັ່ນ: ພືດເສດຖະກິດ(ສາລີ, ພືດຕະກຸນຖົ່ວ, ໝາກເຜັດ, ໝາກເຂືອ)<br>- ສົ່ງເສີມການລ້ຽງສັດນ້ອຍ(ໝູ, ສັດປີກ ແລະ ປ່າ) ໄປຄຽງຄູ່ກັບການລ້ຽງສັດໃຫຍ່.<br>- ຊຸກຍູ້ຂະບວນການປູກໄມ້ ອຸດສະຫະກຳ ໄດ້ແກ່ ໄມ້ເກດສະໜາ, ຢາງພາລາ ແລະ ອື່ນໆ ທີ່ມີທ່າແຮງ.<br>- ຈັດສັນທີ່ດິນທຳການຜະລິດ<br>- ສ້າງຄວາມເຂັ້ມແຂງດ້ານລະບົບການຕະຫຼາດ. |
| 16. ທ່າແຮງ | - ດິນ<br>- ແຮງງານ<br>- ຕະຫຼາດ<br>- ເສັ້ນທາງເຂົ້າເຖິງ<br>- ມີການຜະລິດກະສິກຳ(ເຂົ້າ, ສາລີ ແລະ ອື່ນໆ)<br>- ມີປ່າໝາກຕາວສຳລັບເກັບກູ້ອອກຂາຍ(ກຸ່ມບ້ານປາງທອງ) |
| 17. ຂໍ້ຈຳກັດທາງດ້ານການພັດທະນາ | - ການຄົມມະນາຄົມຂົນສົ່ງຍາມຝົນບໍ່ສະດວກໃນລະດູຝົນ ເນື່ອງ ເສັ້ນທາງມີຄວາມຄ້ອຍຊັນສູງ.<br>- ເຕັກນິກວິຊາການດ້ານການຜະລິດກະສິກຳຍັງຕ່ຳ<br>- ບາງເຂດການເຂົ້າເຖິງຂໍ້ມູນຂ່າວສານ ແມ່ນບໍ່ສະດວກ.<br>- ຂາດທຶນຮອນ. |

| | |
|---|---|
| | - ການພັດທະນາຄວາມຮູ້ຄວາມສາມາດຍັງມີຂໍ້ຈຳກັດ.<br>- ການສະໜອງນ້ຳ ຈາກຊົນລະປະທານໃນຍາມແລ້ງ ແມ່ນບໍ່ພຽງພໍ.<br>- ລະດັບການສຶກສາຍັງຈຳກັດ. |
| 18. ໂຄງການທີ່ດຳເນີນການຈັດຕັ້ງປະຕິບັດ. | 1. ໂຄງການ IFAD(International Fund for Agricultural Development): ເລັງໃສ່ສ້າງຊົນລະປະທານ ແລະ ເສັ້ນທາງ.<br>2. RDMA(GTZ): ເລັງໃສ່ການລ້ຽງສັດ, ປູກຝັງ, ໂຮງຮຽນ ແລະ ກອງທຶນພັດທະນາບ້ານ<br>3. EU: ສາທາ(ນ້ຳສະອາດ, ຫ້ອງນ້ຳ, ສຸກສາລາ)<br>4. ADB: ສ້າງໂຮງຮຽນ.<br>5. ກອງທຶນລຶບລ້າງຄວາມທຸກຍາກ: ປູກຝັກ, ລ້ຽງສັດ. |
| 19. ບໍລິສັດຜູ້ລົງທຶນ. | 1. ຫ້ອຂອງພັດທະນາກະສິກຳ: ສາລີ, ຖົ່ວເຫຼືອງ, ຖົ່ວດິນ, ຖົ່ວແຂກ.<br>2. ທ່ານ ສະເຫຼີມ(ນັກທຸລະກິດ): ສາລີ ແລະ ຖົ່ວດິນ(ເຂດປາງທອງ).<br>3. ຈ່າພົງຢາງພາລາ(ເຂດ ໂຮມສຸກ ແລະ ຜາອຸດົມ).<br>4. ເຈຍເຊີນຢາງພາລາ(ບ້ານ ຖິ່ນແກ້ວ ເຂດ ຜາອຸດົມ) |
| 20. ກຸ່ມບ້ານພັດທະນາ ແລະ ບ້ານ | ກວມເອົາ 4 ກຸ່ມບ້ານ.<br>- ເຂດຜາອຸດົມ ມີ 7 ບ້ານຄື:<br>1. ຜາອຸດົມ<br>2. ໂພນໄຊ<br>3. ນາທີ່ງ<br>4. ຖິ່ນແກ້ວໃຕ້.<br>5. ຖິ່ນແກ້ວກາງ<br>6. ຖິ່ນແກ້ວເໜືອ<br>7. ວຽງຄຳ<br>- ເຂດສິມສະຫວ່າງ ມີ 7ບ້ານ<br>8. ສິມສະຫວ່າງ<br>9. ສອນໄຊ<br>10. ໄຊສະຫວ່າງ<br>11. ໄຊອຸດົມ<br>12. ສີບຸນເຮືອງ<br>13. ດອນສະຫວັນ<br>14. ແກ່ນຄຳ<br>- ກຸ່ມປາງທອງ ມີ 5 ບ້ານ ຄື:<br>15. ປາງທອງ<br>16. ທົ່ງກາງ<br>17. ນາໂຮມ<br>18. ຫ້ວຍແປນ<br>19. ຕີນຜາ<br>- ກຸ່ມບ້ານ ໂຮມສຸກ ມີ 8 ບ້ານຄື: |

| | |
|---|---|
| | 20. ໂຮມສຸກ<br>21. ນາໂຄງ<br>22. ວຽງຄຳ<br>23. ຫ້ວຍປູນ<br>24. ນ້ຳຄາ<br>25. ຂຸງລາດ<br>26. ມຸກສຸກ<br>27. ຂວງ |

- ❖ **ການຈັດລຽງບູລິມະສິດ ບັນຫາຕົ້ນຕໍ**
  - ຂາດດິນທຳການຜະລິດ 1
  - ຄຸນນະພາບຂອງດິນເຊື່ອມໂຊມ 2
  - ນ້ຳຊົນລະປະທານສຳລັບການປູກບໍ່ພຽງພໍ 3
  - ການຈັດສັນບ່ອນລ້ຽງສັດມີຈຳກັດ 4
  - ລັດລ້ຽງຕາຍ 5
  - ຂາດຄວາມຮູ້ດ້ານວິຊາການໃນການປູກພືດ 6
  - ຂາດເຂົ້າກິນ 7
  - ການທຳລາຍປ່າໄມ້ຢ່າງຊະຊາຍ 8
  - ເວລາເຈັບປິ່ນປົວບໍ່ທ່ວງທັນ 9
  - ການແລກປ່ຽນຂໍ້ມູນຂ່າວສານດ້ານກະສິກຳມີຈຳກັດ 10
  - ລາຍຮັບໃນຄອບຄົວຕ່ຳ 11
  - ຂາດນ້ຳສະອາດໃນການບໍລິໂພກ 12
  - ບາງຊົນເຜົ່າຜູ້ຍິງເຮັດວຽກຫຼາຍກວ່າຜູ້ຊາຍ 13
  - ການປູກຍັງບໍ່ທັນເປັນສິນຄ້າ. 14
  - ສັດປ່າຫຼຸດລົງ 15
  - ເຄື່ອງປ່າຂອງດົງຫຼຸດລົງ 16

**ສະຫຼຸບລວມທ່າແຮງຂອງນິເວດ 3:**

| ປະເດັນຄົ້ນຄວ້າ ແລະ ບັນຫາ | ສາເຫດ | ທ່າແຮງ-ໂອກາດ | ຂໍ້ຈຳກັດ |
|---|---|---|---|
| **ທາງດ້ານດິນ ແລະ ທີ່ດິນ** | | | |
| 1. ຂາດພື້ນທີ່ທຳການຜະລິດ | ✦ ປະຊາຊົນທີ່ອາໃສຢູ່ເທິງພູໄດ້ຍົກຍ້າຍຄອບຄົວເຂົ້າມາອາໃສຢູ່.<br>✦ ຂາຍທີ່ດິນ.<br>✦ ປະຊາຊົນເພີ່ມຂຶ້ນ(ຄອບຄົວໃໝ່) | ✦ ຈັດສັນທີ່ດິນໃຫ້ຄອບຄົວນຳໃຊ້.<br>✦ ຫັນປ່ຽນອາຊີບໃໝ່(ເຮັດຫັດຖະກຳ ຫຼື ຄ້າຂາຍ) | ✦ ພື້ນທີ່ຜະລິດກະສິກຳມີຈຳກັດ |
| 2. ຄຸນນະພາບຂອງດິນເຊື່ອມໂຊມ. | - ນຳໃຊ້ຕິດຕໍ່ກັນຫຼາຍປີ.<br>- ບໍ່ມີການປັບປຸງດິນ | - ປູກພືດຕະກຸນຖົ່ວ<br>- ນຳໃຊ້ລະບົບການປູກພືດແບບປະສົມປະສານ.<br>- ຍົກສະມັດຕະພາບຂອງດິນ(ໃສ່ປຸ໋ຍ, ໃສ່ຝຸ່ນ) | - ຄວາມຮູ້ ແລະ ວິທີການປູກພືດຍັງຕ່ຳ.<br>- ການຜະລິດກະສິກຳສ່ວນໃຫຍ່ ອາ ໃສ່ ແຕ່ທຳມະຊາດ.<br>- ວິຊາການລົງແນະນຳມີບໍ່ທົ່ວເຖິງ |
| **ດ້ານການຜະລິດກະສິກຳ ແລະ ປ່າໄມ້** | | | |
| 1. ການປູກພືດຍັງບໍ່ທັນກາຍເປັນສິນຄ້າ. | - ຄວາມຊິນເຄີຍ ແລະ ຮູບການປູກພືດແບບເດີມ.<br>- ບາງເຂດ ການເຂົ້າເຖິງຂໍ້ມູນຂ່າວສານ ຫຼື ການພົວພັນກັບພາຍນອກແມ່ນມີຈຳກັດ. | - ຕະຫຼາດສາມາດເຂົ້າເຖິງໄດ້.<br>- ຫັນປ່ຽນການປູກແບບເດີມໆ ໂດຍ ການຈັດເຝິກອົບ ແລະ ປູກຈິດສຳນຶກ ການປູກພືດ ຊະນິດທີ່ເປັນເສດ ຖະກິດ | - ຂາດຄວາມກະຕືລືລົ້ນ.<br>- ມີບາງຊົນເຜົ່າຍັງມີຮີດຄອງແບບເດີມ. |
| 2. ຂາດເຂົ້າກິນ | ✦ ສັດຕູພືດເຂົ້າທຳລາຍ(ຫອຍປາກກວ້າງ).<br>✦ ຜົນຜະລິດຕົກຕ່ຳ<br>✦ ດິນບໍ່ງາມ<br>✦ ນ້ຳຖ້ວມ<br>✦ ນຳໃຊ້ວິທີການເດີມ. | ✦ ປັບປຸງດິນ.<br>✦ ນຳໃຊ້ຮູບແບບການປູກພືດໃໝ່.<br>✦ ເຝິກອົບຮົມກ່ຽວກັບການຈຳກັດວັດຊະພືດ.<br>✦ ແລກປ່ຽນຂໍ້ມູນຂ່າວສານລະຫວ່າງບ້ານກັບບ້ານ.<br>✦ ວິຊາການລົງຕິດແທດກັບຊາວກະສິກອນ. | ✦ ພື້ນທີ່ມີຈຳກັດ.<br>✦ ຄວາມເອົາໃຈໃສ່ຍັງບໍ່ທັນສູງ.<br>✦ ຂາດທຶນຮອນ.<br>✦ ຂາດບຸດຄະລາກອນລົງຊຸກຍູ້. |
| 3. ການຈັດສັນບ່ອນລ້ຽງສັດໃຫຍ່ມີຈຳກັດ. | - ຂາດພື້ນທີ່ | - ກຳນົດຈະແຈ້ງສຳລັບພື້ນທີ່ການລ້ຽງສັດ.<br>- ສົ່ງເສີມການລ້ຽງສັດໃນຮູບແບບເປັນຟາມ | - ພື້ນທີ່ຢູ່ຫ່າງໄກ<br>- ຊາວກະສິກອນຍັງຂາດຄວາມຮູ້ກ່ຽວ |

| | | | |
|---|---|---|---|
| 4. ສັດລ້ຽງນ້ອຍເປັນພະຍາດ(ໝູ, ສັດປີກ)<br>5. ນ້ຳສຳລັບການປູກພືດບໍ່ພຽງ ພໍ. | ✦ ປ່ອຍຊະຊາຍ<br>✦ ບໍ່ໄດ້ສັກຢາກັນພະຍາດ<br>- ຊົນລະປະທານຂະໜາດບໍ່ທົ່ວເຖີງ. | ✦ ຍົກລະດັບຄວາມຮູ້ ກ່ຽວກັບການປ້ອງພະຍາດສັດ.<br>✦ ລ້ຽງເປັນຟາມ.<br>- ຂະຫຍາຍຊົນລະປະທານ. | ກັບການລ້ຽງສັດ.<br>✦ ບໍ່ມີສັດຕະວະແພດຂັ້ນບ້ານ.<br>✦ ວິຊາການລົງບໍ່ທົ່ວເຖິງ.<br>- ຂາດງົບປະມານ. |
| **ທາງດ້ານຊັບພະຍາກອນ ແລະ ປ່າໄມ້.** | | | |
| 1. ເຄື່ອງປ່າຂອງດົງຫຼຸດລົງ<br><br><br>2. ສັດປ່າຫຼຸດລົງ<br><br><br><br><br><br><br>3. ປ່າໄມ້ຖືກທຳລາຍ | ✦ ຂຸດຄົ້ນແບບດັບສູນ<br>✦ ຄວາມຕ້ອງການຕະຫຼາດມີສູງ<br>✦ ຖາງປ່າເຮັດໄຮ່<br>✦ ກ ລ່າເນື້ອແບບດັບສູນ<br>- ການລ່າເນື້ອແບບດັບສູນ ແລະ ເພື່ອຂາຍ<br>- ຂາດການຄຸ້ມຄອງທີ່ດີ<br>- ປະຊາຊົນຍັງຖືເບົາຕໍ່ລະບຽບກົດໝາຍ.<br>✦ ເຮັດໄຮ່ເຄື່ອນທີ່<br>✦ ຂະຫຍາຍພື້ນທີ່ທຳການປູກພືດ | ✦ ປູກທົດແທນ<br>✦ ສ້າງລະບຽບການຄຸ້ມຄອງ<br>✦ ອອກຕົວເລກຂຸດຄົ້ນທີ່ຖືກກັບຕົວຈິງ<br><br>- ວາງກົດລະບຽບ<br><br><br><br><br>✦ ປູກຈິດສຳນຶກໃຫ້ແກ່ຊາວບ້ານຮູ້ຈັກຮັກສາປ່າໄມ້.<br>✦ ໃຫ້ຊາວບ້ານມີສ່ວນຮ່ວມໃນການຮັກສາປ່າໄມ້.<br>✦ ກຳນົດເຂດການຜະລິດກະສິກຳ | ✦ ຂາດຮູບແບບການຈັດສັນ<br>✦ ປະຊາຊົນຍັງຖືເບົາໃນການປະຕິບັດລະ ບຽບ<br><br>- ປະຊາຊົນຍັງຖືເບົາ<br><br><br><br><br>✦ ພື້ນທີ່ທຳການຜະລິດມີນ້ອຍ.<br>✦ ຂະບວນການປູກໄມ້ອຸດສະຫະກຳ ແມ່ນ ມີນ້ອຍ. |
| **ທາງດ້ານສັງຄົມ ແລະ ສາທາລະນະສຸກ.** | | | |
| 1. ບາງຊົນເຜົ່າຜູ້ຍິງເຮັດວຽກ ຫຼາຍກວ່າຜູ້ຊາຍ(ຂະມຸ)<br><br>2. ຂາດນ້ຳສະອາດ ເພື່ອບໍລິ ໂພກໃນຍາມແລ້ງ | ✦ ເຊື່ອຖືຮີດຄອງເກົ່າ<br><br><br>- ດິນຟ້າອາກາດແຫ້ງແລ້ງ.<br>- ນ້ຳຫ້ວຍບໍ່ສະອາດ.<br>- ນ້ຳລິນບໍ່ສະດວກ<br>- ຂາດງົບປະມານໃນການກໍ່ສ້າງ | ✦ ເຜີຍແຜ່ບົດບາດຍິງ-ຊາຍ<br><br><br>- ເຈາະນ້ຳສະອາດ ແລະ ສ້າງນ້ຳລິນ | ✦ ຄວາມເຊື່ອຖືດ້ານຮີດຄອງປະເພນີ.<br>✦ ຂາດຄວາມຮູ້ ແລະ ບໍ່ມີການພົວພັນ ກັບພາຍໃນນອກ.<br>- ຂາດທຶນຮອນ. |

## **ບົດແນບທ້າຍ 1**: ເອກະສານອ້າງອີງ

- ບົດລາຍງານຜົນການສຳຫຼວດ ແລະ ແບ່ງເຂດຜະລິດກະສິກຳ ແຂວງບໍ່ແກ້ວ, ໂດຍສູນສຳຫຼວດ ແລະ ແບ່ງເຂດດິນກະສິກຳ ປີ 2006.
- ບົດສະຫຼູບແຜນພັດທະນາເສດຖະກິດ ສັງຄົມປະຈຳປີ 2007-08 ຫ້ອງການແຜນການ ແລະ ສັງລວມ ເມືອງຜາອຸດົມ, ແຂວງບໍ່ແກ້ວ.
- ຄູ່ມືການວິເຄາະລະບົບ ແລະ ຈັດແບ່ງເຂດນິເວດກະສິກຳ ປ່າໄມ້, ໂດຍໂຄງການຍ່ອຍຄົ້ນຄ້ວາຄຸ້ມຄອງວາງແຜນນຳໃຊ້ທີ່ດິນ, ໂຄງການຄົ້ນຄ້ວາ ກະສິກຳ ປ່າໄມ້ເຂດພູດອຍ ຮ່ວມມື ລາວ-ຊູແອດ, ປີ 2006.
- ຂໍ້ມູນແຫຼ່ງນ້ຳ ແລະ ຄວາມສູງ ໂດຍ: ໂຄງການຈັດຊັ້ນແຫຼ່ງນ້ຳ, ປີ 1997.

## **ບົດແນບທ້າຍ 2**: ແຜນທີ່ຕ່າງໆທີ່ນຳໃຊ້ເຂົ້າໃນການ ຈັດແບ່ງເຂດນິເວດກະສິກຳ ປ່າໄມ້